LAO STATISTICS BUREAU

# ການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ III - ປີ 2023



## ບົດລາຍງານຕົວຊີ້ບອກຕົ້ນຕໍ

*ມັງກອນ 2024*

USAID FROM THE AMERICAN PEOPLE

Co-funded by the European Union

UNFPA

Australian Government
Department of Foreign Affairs and Trade

unicef
ເພື່ອເດັກທຸກໆຄົນ

**ການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III** ໄດ້ຈັດຕັ້ງປະຕິບັດໃນປີ 2023 ໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ແຜນງານການສຳຫຼວດສຸຂະພາບແມ່ ແລະ ເດັກ (MICS) ໃນລະດັບສາກົນ. ອົງການ ຢູນິເຊັບສະໜັບສະໜູນດ້ານວິຊາການ ແລະ ອົງການ UNICEF, USAID, DFAT, EU and UNFPA ສະໜັບສະໜູນດ້ານງົບປະມານ.

ແຜນງານການສຳຫຼວດສຸຂະພາບແມ່ ແລະ ເດັກ MICS ໃນລະດັບສາກົນ ໄດ້ຖືກສ້າງຕັ້ງໂດຍອົງການສະຫະປະຊາຊາດສຳລັບເດັກ (ຢູນິເຊັບ) ໃນປີ 1990. ແຜນງານດັ່ງກ່າວມີຈຸດປະສົງເພື່ອສະໜັບສະໜູນໃຫ້ປະເທດຕ່າງໆເຮັດການສຳຫຼວດຄົວເຮືອນທີ່ມີຫຼາຍຈຸດປະສົງ ແລະ ເກັບກຳຂໍ້ມູນກ່ຽວກັບສະຖານະພາບຂອງ ແມ່ຍິງ ແລະ ເດັກນ້ອຍ ເພື່ອສົມທຽບຂໍ້ມູນໃນລະດັບສາກົນ. ແຜນງານ MICS ຈະເກັບກຳຕົວຊີ້ບອກ ເພື່ອຮັບໃຊ້ນະໂຍບາຍ, ແຜນງານ, ແຜນງານການພັດທະນາແຫ່ງຊາດ ແລະ ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ, ການປະຕິບັດຄວາມໝາຍໝັ້ນ ແລະ ພັນທະສາກົນຕ່າງໆ ຈຸດປະສົງຂອງບົດລາຍງານນີ້ແມ່ນເພື່ອອຳນວຍຄວາມສະດວກໃນການນຳໃຊ້ ແລະ ເຜີຍແຜ່ຜົນການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ໃຫ້ທັນເວລາ. ບົດລາຍງານນີ້ຈະນຳສະເໜີຕົວຊີ້ບອກເທົ່ານັ້ນ. ບົດລາຍງານລະອຽດ ແລະ ບົດລາຍງານຫຍໍ້ທາງດ້ານສະຖິຕິແບ່ງຕາມຂະແໜງການຈະຖືກຈັດພິມໃນປີ 2024.

ທ່ານສາມາດຊອກຫາຂໍ້ມູນ ກ່ຽວກັບ ແຜນງານການສຳຫຼວດສຸຂະພາບແມ່ນ ແລະ ເດັກ (MICS) ເພີ່ມເຕີມ ໄດ້ທີ່ເວັບໄຊ mics.unicef.org.

---

**ກະລຸນາອ້າງອີງທີ່ມາຂອງຂໍ້ມູນດັ່ງລຸ່ມນີ້:**

ສູນສະຖິຕິແຫ່ງຊາດລາວ. ປີ 2024. ການສຳຫຼວດດັດສະນີໝາຍສັງຄົມລາວ 2023 - ບົດລາຍງານຕົວຊີ້ບອກ, ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສູນສະຖິຕິແຫ່ງຊາດລາວ.

# ສາລະບານ


ຄຳນຳ........................................................................................4

ພາກສະເໜີ ...................................................................................5

ຕົວແທນການສຳຫຼວດ, ການດຳເນີນການສຳຫຼວດ ແລະ ອັດຕາການຕອບ.......................7

ຄົວເຮືອນ ແລະ ຄຸນລັກສະນະຂອງຄົວເຮືອນທີ່ຕອບຄຳຖາມ.........................................9

ການຕາຍໃນໄວເດັກ..........................................................................12

ການຈະເລີນພັນ ແລະ ສຸຂະພາບຂອງແມ່...................................................14

ການຈະເລີນເຕີບໂຕຂອງເດັກ-ສຸຂະພາບ,ໂພຊະນາການ ແລະ ການພັດທະນາ.................19

ການສຶກສາ ແລະ ການຮຽນຮູ້.................................................................24

ການປົກປ້ອງເດັກຈາກຄວາມຮຸນແຮງ ແລະ ການສະແຫວງຫາຜົນປະໂຫຍດ........,......28

ການດຳລົງຊີວິດໃນສະພາບແວດລ້ອມທີ່ສະອາດ ແລະ ປອດໄພ.................................30

ໂອກາດເທົ່າທຽມກັນໃນຊີວິດ...............................................................32

# ຄຳນຳ

ສູນສະຖິຕິແຫ່ງຊາດ ມີຄວາມພູມໃຈ ນຳສະເໜີບົດລາຍງານຕົວຊີ້ບອກຕົ້ນຕໍ ຜົນໄດ້ຮັບຈາກການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ປີ 2023 ເຊິ່ງເປັນຄວາມພະຍາຍາມທີ່ສຳຄັນ ໃນການເກັບກຳຂໍ້ມູນເພື່ອປະເມີນສະພາບຄວາມເປັນຢູ່ຂອງປະຊົນລາວ. ການສຳຫຼວດນີ້ ເປັນເຄື່ອງມືທີ່ສຳຄັນໃນການປະເມີນສະພາບຂອງເດັກນ້ອຍ, ແມ່ຍິງ ແລະ ຜູ້ຊາຍ ໃນຂອບເຂດທົ່ວປະເທດ.

ໂດຍອີງໃສ່ມາດຕະຖານຂອງການສຳຫຼວດແມ່ ແລະ ເດັກຂອງສາກົນ, ການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ III ໄດ້ຖືກອອກແບບເພື່ອເກັບກຳຂໍ້ມູນທີ່ມີຄວາມຄົບຖ້ວນ ແລະ ທັນເວລາ. ນອກຈາກເປັນຂໍ້ມູນທີ່ມີຄວາມຄົບຖ້ວນແລ້ວຍັງມີຄວາມສຳຄັນທາງຍຸດທະສາດ ເປັນພື້ນຖານ ສຳລັບການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ IV ອີກດ້ວຍ. ນອກຈາກນີ້ ການສຳຫຼວດດັດສະນີໝາຍສັງຄົມລາວ ຍັງມີບົດບາດສຳຄັນ ໃນການສະໜອງຂໍ້ມູນສຳ ລັບການຕິດຕາມການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ແລະ ຄວາມຄືບໜ້າໃນການຫຼຸດພົ້ນອອກຈາກພາວະປະເທດດ້ອຍພັດທະນາ.

ບົດລາຍງານຕົວຊີ້ບອກຕົ້ນຕໍສະບັບນີ້ ຈະນຳສະເໜີໃຫ້ທັນເວລາ ເພື່ອໃຫ້ຜູ້ມີສ່ວນຮ່ວມທຸກພາກສ່ວນໄດ້ຮັບຊາບ ແລະ ສຶກສາຄົ້ນຄວ້າຜົນໄດ້ຮັບດັ່ງກ່າວ, ບົດລາຍງານສະບັບນີ້ ໄດ້ສະໜອງຂໍ້ມູນ ເພື່ອເປັນບ່ອນອີງໃນການຕັດສິນໃຈ ແລະ ສ້າງແຜນງານ, ໂຄງການ ເພື່ອຍົກສູງຊີວິການເປັນຢູ່ຂອງປະຊາຊົນລາວ. ສູນສະຖິຕິແຫ່ງຊາດ ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ຄູ່ຮ່ວມງານທຸກທ່ານ, ໂດຍສະເພາະ ແມ່ນກະຊວງສາທາລະນະສຸກ (MoH), ກະຊວງສຶກສາທິການ ແລະ ກິລາ (MoES), ແລະ ຄູ່ຮ່ວມພັດທະນາ ອົງການ UNICEF, UNFPA, USAID, EU ແລະ DFAT.

ຂໍສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈ ມາຍັງບັນດາຄົວເຮືອນ, ຜູ້ສະຫນອງຂໍ້ມູນ, ນັກກວດກາ ແລະ ນັກເດີນສຳຫຼວດທຸກທ່ານ ທີ່ໄດ້ມີບົດບາດສຳຄັນໃນຄວາມສຳເລັດຂອງການສຳຫຼວດ LSIS III ໃນຄັ້ງນີ້. ດ້ວຍຄວາມພະຍາຍາມໃນການຮ່ວມມືກັບຄູ່ຮ່ວມງານທັງຫມົດ ສູນສະຖິຕິແຫ່ງຊາດຈະສືບຕໍ່ຂຽນບົດລາຍງານສະບັບສຸດທ້າຍ ຂອງການສຳຫຼວດ LSIS III ແລະ ມີຄວາມຕັ້ງໃຈ ທີ່ຈະເຜີຍແຜ່ບົດລາຍງານດັ່ງກ່າວຕື່ມອີກ ເພື່ອຜົນປະໂຫຍດຂອງຊາດ.

ຕາງໜ້າໃຫ້ສູນສະຖິຕິແຫ່ງຊາດ ແລະ ໃນນາມຫົວໜ້າຄະນະຊີ້ນຳລະດັບຊາດ ສຳລັບການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ຂໍສະແດງຄວາມຂອບໃຈມາຍັງທຸກໆທ່ານ.



ຫົວໜ້າສູນສະຖິຕິແຫ່ງຊາດ, ຫົວໜ້າຄະນະຊີ້ນຳລະດັບຊາດ

ການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ປີ 2023

# ພາກສະເໜີ

ການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ໄດ້ຖືກຈັດຕັ້ງປະຕິບັດໂດຍສູນສະຖິຕິແຫ່ງຊາດຮ່ວມກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ເປັນການສຳຫຼວດຄັ້ງຫລ້າສຸດໃນ ສ ປປລາວ. ການເກັບກຳຂໍ້ມູນພາກສະໜາມແມ່ນເລີ່ມແຕ່ເດືອນມີນາ ຫາເດືອນກັນຍາ ປີ 2023. ການສຳຫຼວດໃນຄັ້ງນີ້ ແມ່ນໄດ້ຮັບທຶນສະໜັບສະໜູນຈາກລັດ ຖະບານ ແລະ ບັນດາອົງການຈັດຕັ້ງສາກົນ ປະກອບມີ ອົງການ UNICEF, UNFPA, USAID, EU, ແລະ DFAT ພາຍໃຕ້ການສະໜັບສະໜູນທາງດ້ານວິຊາການຈາກ ຄະນະຊ່ຽວຊານຂອງອົງການ UNICEF ສຳລັບ ການສຳຫຼວດແມ່ ແລະ ເດັກຂອງສາກົນ (UNICEFs MICS). ບົດລາຍງານສະບັບນີ້ ໄດ້ນຳສະເໜີຕົວຊີ້ບອກຕົ້ນຕໍ ທີ່ໄດ້ຈາກການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III, ສ່ວນບົດລາຍສຸດທ້າຍທີ່ປະກອບມີລາຍລະອຽດຜົນຂອງການສຳຫຼວດນັ້ນ ແມ່ນຈະໄດ້ສືບຕໍ່ປະກາດນຳໃຊ້ໃນລະຫວ່າງກາງປີ 2024.

*ຈຸດປະສົງຕົ້ນຕໍ ຂອງການສຳຫຼວດໃນຄັ້ງນີ້ ແມ່ນເພື່ອ:*

- ປັບປຸງຂໍ້ມູນຕົວຊີ້ບອກສຳລັບການພັດທະນາດ້ານສັງຄົມ ເພື່ອສະໜອງໃຫ້ແກ່ ການຕິດຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs);
- ສະໜອງຂໍ້ມູນພື້ນຖານສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2021-2025 ແລະການຕິດຕາມສະພາບການຫຼຸດພົ້ນອອກຈາກພາວະປະເທດດ້ອຍພັດທະນາ;
- ຜະລິດຂໍ້ມູນສະຖິຕິດ້ານພົນລະເມືອງ ແລະ ຕົວຊີ້ບອກດ້ານສັງຄົມ; ແລະ
- ສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການປະສານງານ ທາງດ້ານສະຖິຕິສັງຄົມໃນ ສ ປປ ລາວ ແລະ ການນຳໃຊ້ຂໍ້ມູນ ສຳລັບການສ້າງແຜນນະໂຍບາຍ ແລະ ການຕິດຕາມບັນດາແຜນງານຕ່າງໆ.

## ຕົວຊີ້ບອກຕົ້ນຕໍ

ບັນດາຕົວຊີ້ບອກຕົ້ນຕໍ ທີ່ນຳສະເໜີໃນບົດລາຍງານສະບັບນີ້ ແມ່ນຜົນໄດ້ຮັບເບື້ອງຕົ້ນ ເພື່ອເປັນພື້ນຖານໃຫ້ແກ່ການສຶກສາລົງເລິກໃນຕໍ່ໜ້າ, ສິ່ງດັ່ງກ່າວນີ້ ແມ່ນມີຄວາມສຳຄັນຕ້ອງມີຄວາມເຂົ້າໃຈບັນດາຕົວຊີ້ບອກຕ່າງໆ ເຊິ່ງໄດ້ສະແດງ ໃຫ້ເຫັນສະເພາະຕົວເລກໃນລະດັບຊາດເທົ່ານັ້ນ. ນອກຈາກນີ້ບົດລາຍຍັງໄດ້ສະແດງໃຫ້ເຫັນເຖິງ ສະພາບການຕ່າງໆທີ່ເປັນປະໂຫຍດ ແຕ່ຍັງບໍ່ໄດ້ນຳສະເໜີພາບລວມທັງໝົດຈາກການສຳຫຼວດ. ບົດລາຍງານສຸດທ້າຍແບບຄົບຊຸດແມ່ນກຳ ລັງຢູ່ໃນຂັ້ນຕອນການກະກຽມ ເຊິ່ງຈະໄດ້ນຳສະເໜີຢ່າງລະອຽດຄົບຊຸດຕື່ມ.

ໃນບົດລາຍງານທີ່ຈະອອກສຸດທ້າຍນີ້ ແມ່ນຈະນຳສະເໜີຂໍ້ມູນ ແລະ ລະອຽດ ຊຶ່ງບົດລາຍງານຕົວຊີ້ບອກຕົ້ນຕໍສະບັບນີ້ຍັງບໍ່ໄດ້ນຳສະເໜີ. ສິ່ງສຳຄັນໄປກວ່ານັ້ນ, ໃນບົດລາຍງານສຸດທ້າຍຈະນຳສະເໜີຂໍ້ມູນໃນລະດັບຂັ້ນແຂວງ ເພື່ອໃຫ້ມີຄວາມເຂົ້າໃຈເຖິງສະພາບ ແລະ ຄວາມແຕກຕ່າງໃນລະດັບພາກພື້ນ. ຈຸດປະສົງໃນການເຜີນແຜ່ບົດລາຍງານຕົວຊີ້ບອກຕົ້ນຕໍນີ້ ແມ່ນເພື່ອນຳສະເໜີສະພາບລວມເບື້ອງຕົ້ນເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າລົງເລິກແຕ່ລະບັນຫາໃນຂັ້ນຕໍ່ໄປ. ບັນດາຄູ່ຮ່ວມພັດທະນາ ແລະ ຜູ້ທີ່ສົນໃຈ ບັນດາຂໍ້ມູນ ແລະ ຄວາມເຂົ້າໃຈທີ່ຄົບຖ້ວນ ແມ່ນຈະໄດ້ນຳສະເໜີພາຍຫຼັງທີ່ບົດລາຍງານສຸດທ້າຍຜົນຈາກການສຳຫຼວດໄດ້ຖືກຈັດພິມ ແລະ ເຜີຍແຜ່. ໃນບົດລາຍງານສະບັບນີ້ຈະບໍ່ໄດ້ຢັ້ງຢືນ ຫຼືຊີ້ໃຫ້ເຫັນເຖິງບັນຫາສິ່ງທີ່ທ້າທາຍ ແຕ່ຈະສະໜອງຂໍ້ມູນເພື່ອໃຫ້ມີຄວາມເຂົ້າໃຈທີ່ເລິກເຊິ່ງເຖິງການປ່ຽນແປງໃນລະດັບພາກ ແລະ ຂັ້ນຊຸມຊົນຕ່າງໆ.

ໄລຍະເວລາໃນການຈັດຕັ້ງປະຕິບັດການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ແມ່ນເປັນຂີດໝາຍທີ່ສຳຄັນເປັນການເກັບກຳຂໍ້ມູນທີ່ມີຄວາມຄົບຖ້ວນພາຍຫຼັງການແຜ່ລະບາດຂອງພະຍາດ COVID-19. ຄຸນລັກສະນະສະເພາະທາງດ້ານໄລຍະເວລາຂອງການສຳຫຼວດນີ້ ຈະຊ່ວຍໃຫ້ພວກເຮົາມີຄວາມເຂົ້າໃຈຕື່ມ ຕໍ່ກັບຜົນກະທົບຈາກການແຜ່ລະຍາດຂອງເຊື້ອພະຍາດດັ່ງກ່າວ ລວມທັງຜົນກະທົບຈາກການປິດເມືອງ ແລະ ຜົນກະທົບທາງດ້ານສຸຂະພາບ.

ການເກັບກຳຂໍ້ມູນພາຍຫຼັງທີ່ມີການແຜ່ລະບາດຂອງເຊື້ອພະຍາ COVID-19 ເປັນໂອກາດທີ່ເໝາະສົມໃນການວັດແທກຜົນກະທົບຈາກການແຜ່ລະບາດ ຕໍ່ກັບບັນຫາທາງດ້ານສັງຄົມ, ເສດຖະກິດ ແລະ ການປ່ຽນແປງທາງດ້ານສຸຂະພາບ ໃນ ສ ປປ ລາວ. ຂໍ້ມູນຈາກການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ນີ້ ຈະເປັນການເປີດທາງໃຫ້ພວກເຮົາເພື່ອຮັບຮູ້ໄດ້ເຖິງສະພາບການປ່ຽນແປງໃນຊຸມຊົນຕ່າງໆ, ປະສິດທິພາບໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ການຟື້ນຕົວຂອງບັນດາຂະແໜງການຕ່າງໆ.

ຄວາມເຂົ້າໃຈຕໍ່ກັບບັນຫາທີ່ເຮັດໃຫ້ມີການແຜ່ລະບາດ ເປັນສິ່ງທີ່ສຳຄັນໃນການກຳນົດນະໂຍບາຍ ແລະ ແຜນງານຕ່າງໆໃນອານາຄົດ. ການສຳຫຼວດດັດສະນີໝາຍສັງຄົມລາວ ຈະສະແດງຂໍ້ມູນທີ່ສຳຄັນ ຕໍ່ກັບຜົນກະທົບຈາກການແຜ່

ລະບາດໃນໄລຍະຍາວ ແລະ ຈະເປັນບ່ອນອີງໃຫ້ແກ່ບັນດາຄູ່ຮ່ວມພັດທະນາຕ່າງໆ ໃນການຕັດສິນໃຈ ໂດຍຄຳນຶງເຖິງບັນຫາສິ່ງທີ່ທ້າທາຍ ແລະ ການຜັກດັນໂອກາດຈາກສະພາບການປ່ຽນແປງໃໝ່.

**ການຈັດຕັ້ງປະຕິບັດການສຳຫຼວດ ດັດສະນີໝາຍສັງຄົມລາວຄັ້ງທີ III**

ການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ III ປີ 2023 ແມ່ນການສຳຫຼວດຕົວແທນລະດັບຊາດ ກວມເອົາ 18 ແຂວງໃນຂອບເຂດທົ່ວປະເທດ. ຂະໜາດຄົວເຮືອນຕົວແທນສຳລັບການສຳຫຼວດນີ້ ແມ່ນມີ 21,000 ຄົວເຮືອນ ເຊິ່ງໄດ້ຖືກຄັດເລືອກໂດຍນຳໃຊ້ວິທີການຄັດເລືອກ 2 ຂັ້ນຕອນ ເຊິ່ງໄດ້ແບ່ງບັນດາຄົວເຮືອນຕົວແທນເປັນ 3 ກຸ່ມຄື: ຄົວເຮືອນໃນເຂດຕົວເມືອງ, ຊົນນະບົດມີເສັ້ນທາງເຂົ້າເຖິງ ແລະ ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ເຊິ່ງໄດ້ເລືອກເອົາແມ່ຍິງ ແລະ ຜູ້ຊາຍ ທີ່ມີອາຍຸ 15-49 ປີ ໃນຄົວເຮືອນຕົວແທນ ເປັນເປົ້າໝາຍຂອງການສຳຫຼວດ.

ແບບສອບຖາມສຳລັບການສຳຫຼວດໃນຄັ້ງນີ້ ແມ່ນນຳໃຊ້ແບບສອບຖາມຕາມມາດຕະຖານຂອງການສຳຫຼວດແມ່ ແລະ ເດັກຂອງສາກົນ ແລະ ໄດ້ປັບປຸງໃຫ້ເຂົ້າກັບສະພາບ ແລະ ຄຸນລັກສະນະ ຂອງ ສ ປປ ລາວ. ແບບສອບຖາມສຳລັບການສຳຫຼວດໃນຄັ້ງນີ້ ປະກອບມີ: ແບບສອບຖາມສຳລັບຄົວເຮືອນ, ແບບສອບຖາມສຳລັບແມ່ຍິງ ແລະ ຜູ້ຊາຍທີ່ມີອາຍຸ 15-49 ປີ, ແບບສອບຖາມສຳລັບເດັກນ້ອຍທີ່ມີອາຍຸຕ່ຳກວ່າ 5 ປີ ແລະ 5-17 ປີ, ມີພາກໜຶ່ງໄດ້ເພີ່ມເຂົ້າຕື່ມໃນການສຳຫຼວດຄັ້ງທີ III ກ່ຽວກັບທັກສະຂອງການຮຽນຮູ້. ການຝຶກອົບຮົມສຳລັບຄູຝຶກ, ນັກກວດກາ ແລະ ນັກເດີນສຳຫຼວດ ໄດ້ດຳເນີນຕາມຂັ້ນຕອນໂດຍສຸມໃສ່ ການອະທິບາຍທຳຄວາມເຂົ້າໃຈ ກ່ຽວກັບແນວຄວາມຄິດ, ສະພາບຄຸນລັກສະນະຂອງ ທ້ອງຖິ່ນ, ການດຳເນີນການສຳຫຼວດ ແລະ ການນຳໃຊ້ລະບົບ CAPI ສຳລັບການເກັບກຳຂໍ້ມູນພາກສະໜາມ. ໃນໄລຍະການຝຶກອົບຮົມໄດ້ມີການຝຶກຫັດໃນຫ້ອງ ແລະ ການລົງທົດລອງຕົວຈິງຢູ່ພາກສະໜາມ.

# ຕົວແທນການສຳຫຼວດ, ການດຳເນີນການສຳຫຼວດ ແລະ ອັດຕາການຕອບ

## ຕົວແທນການສຳຫຼວດ ແລະ ການດຳເນີນການສຳຫຼວດ

| | | | |
|---|---|---|---|
| ຂອບເຂດຕົວແທນ<br><br>ປັບປຸງ | ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ IV 2015 ແລະ ບັນຊີບ້ານ ປີ 2021<br><br>ມິຖຸນາ-ທັນວາ, 2022 | ແບບສອບຖາມ | ຄົວເຮືອນ<br>ແມ່ຍິງ (ອາຍຸ 15-49)<br>ຜູ້ຊາຍ (ອາຍຸ 15-49)<br>ເດັກນ້ອຍ ອາຍຸຕ່ຳກວ່າ 5 ປີ<br>ເດັກນ້ອຍ ອາຍຸ 5-17<br>ການກວດຄຸນນະພາບນ້ຳ |
| ການຝຶກອົບຮົມຜູ້ສອບຖາມ | ກຸມພາ-ມີນາ 2023 | ວຽກພາກສະໜາມ | ມີນາ-ສິງຫາ 2023 |

## ຕົວແທນຂອງການສຳຫຼວດ

| | | | |
|---|---|---|---|
| ຄົວເຮືອນ<br>-ຕົວແທນ<br>-ມີຄົນຢູ່ອາໄສ<br>-ຖືກສຳພາດ<br>-ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ) | <br>20,993<br>20,456<br>20,325<br>99.4 | ການກວດຄຸນນະພາບນ້ຳ<br>-ຕົວແທນ[1]<br>-ມີຄົນຢູ່ອາໄສ<br>ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ)<br>-ຄົວເຮືອນ<br>-ແຫຼ່ງນ້ຳ | <br>5,248<br>5,124<br><br>97.9<br>91.5 |
| ແມ່ຍິງ (ອາຍຸ 15-49)<br>-ເປົ້າໝາຍສຳພາດ<br>-ຜູ້ຖືກສຳພາດ<br>-ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ) | <br>22,512<br>22,126<br>98.3 | ເດັກນ້ອຍ ອາຍຸຕ່ຳ 5 ປີ<br>-ເປົ້າໝາຍສຳພາດ<br>-ແມ່/ຜູ້ດູແລເບິ່ງແຍງເດັກທີ່ຖືກສຳພາດ<br>-ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ) | <br>9,346<br>9,286<br>99.4 |
| ຜູ້ຊາຍ (ອາຍຸ 15-49)<br>-ຈຳນວນຄົວເຮືອນທີ່ຖືກສຳພາດ<br>-ເປົ້າໝາຍສຳພາດ[2]<br>-ຜູ້ຖືກສຳພາດ<br>-ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ) | <br>22,303<br>10,800<br>10,340<br>95.7 | ເດັກນ້ອຍ ອາຍຸ 5-17<br>-ຈຳນວນຄົວເຮືອນທີ່ຖືກສຳພາດ<br>-ເປົ້າໝາຍສຳພາດ[3]<br>-ແມ່/ຜູ້ດູແລເບິ່ງແຍງ ທີ່ຖືກສຳພາດ<br>-ອັດຕາສ່ວນໃນການໃຫ້ສຳພາດ (ສ່ວນຮ້ອຍ) | <br>24,060<br>13,165<br>13,105<br>99.5 |

## ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ

| | | | |
|---|---|---|---|
| ຂະໜາດສະເລ່ຍຂອງຄົວເຮືອນ<br>ອັດຕາສ່ວນຮ້ອຍຂອງພົນລະເມືອງພາຍໃຕ້:<br>-ອາຍຸ 5 ປີ<br>-ອາຍຸ 18 ປີ<br>ອັດຕາສ່ວນສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ມີການເກີດລູກຢ່າງໜ້ອຍໜຶ່ງຄົນໃນ 2 ປີຜ່ານມາ | 4.4<br><br>9.7<br>35.5<br>15.6 | ອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ໃນ<br>-ເຂດຕົວເມືອງ<br>-ເຂດຊົນນະບົດ<br>-ຊົນນະບົດທີ່ມີເສັ້ນທາງ<br>-ຊົນນະບົດທີ່ບໍ່ມີເສັ້ນທາງ | <br>32.3<br>67.7<br>62.3<br>5.4 |

[1] ແບບສອບຖາມສຳລັບກວດຄຸນນະພາບນ້ຳໄດ້ຖືກນຳໃຊ້ໃນຈຳນວນຫ້າຄົວເຮືອນທີ່ຖືກເລືອກຈາກການຊຸ່ມໃນແຕ່ລະບ້ານ.

[2] ແບບສອບຖາມສຳລັບຜູ້ຊາຍໄດ້ຖືກໃຊ້ກັບຜູ້ຊາຍທັງໝົດທີ່ມີອາຍຸ 15-49 ປີໃນທຸກໆຄົວເຮືອນທີສອງ.

[3] ແບບສອບຖາມສຳລັບເດັກອາຍຸ 5-17 ປີໄດ້ຖືກນຳໃຊ້ກັບເດັກໜຶ່ງຄົນທີ່ຖືກຄັດເລືອກຈາກການຊຸ່ມໃນແຕ່ລະຄົວເຮືອນທີ່ຖືກສຳພາດ.



# ຄົວເຮືອນ
# ແລະ ຄຸນລັກສະນະ ຂອງຄົວເຮືອນທີ່ຕອບຄໍາຖາມ

© UNICEF Laos

## ຄົວເຮືອນ ແລະ ຄຸນລັກສະນະຂອງຄົວເຮືອນທີ່ຕອບຄຳຖາມ

| ຕົວຊີ້ບອກ MICS | | ປພຍ (SDG)[4] | ນິຍາມ[5] | ສ່ວນຮ້ອຍ |
|---|---|---|---|---|
| SR.1 | ການເຂົ້າເຖິງໄຟຟ້າ | 7.1.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ເຂົ້າເຖິງໄຟຟ້າ | 96.5 |
| SR.2 | ອັດຕາການຮູ້ໜັງສື (ອາຍຸ 15-24 ປີ) | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸແຕ່ 15-24 ປີ ທີ່ສາມາດອ່ານຂໍ້ຄວາມສັ້ນ ຫຼື ປະໂຫຍດງ່າຍດາຍກ່ຽວກັບຊີວິດປະຈຳວັນ ຫຼື ຜູ້ທີ່ໄດ້ເຂົ້າຮຽນລະດັບມັດທະຍົມຕົ້ນ ຫຼື ມັດທະຍົມປາຍ<br>ແມ່ຍິງ<br>ຜູ້ຊາຍ | <br><br>82.1<br>86.3 |
| SR.3 | ການເຂົ້າເຖິງສື່ສານມວນຊົນ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸແຕ່ 15-49 ປີ ທີ່ໄດ້ອ່ານໜັງສືພິມ ຫຼື ວາລະສານ, ຟັງວິທະຍຸ ແລະ ເບິ່ງໂທລະພາບ ຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ<br>ແມ່ຍິງ<br>ຜູ້ຊາຍ | <br><br>3.6<br>2.2 |
| SR.4 | ຄົວເຮືອນທີ່ມີວິທະຍຸ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ມີວິທະຍຸ | 12.7 |
| SR.5 | ຄົວເຮືອນທີ່ມີໂທລະພາບ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ມີໂທລະພາບ | 71.6 |
| SR.6 | ຄົວເຮືອນທີ່ມີໂທລະສັບ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ມີໂທລະສັບ (ໂທລະສັບຕັ້ງໂຕະ ຫຼື ໂທລະສັບມືຖື) | 93.4 |
| SR.7 | ຄົວເຮືອນທີ່ມີຄອມພິວເຕີ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ມີຄອມພິວເຕີ | 10.9 |
| SR.8 | ຄົວເຮືອນທີ່ມີອິນເຕີເນັດ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ມີອິນເຕີເນັດໂດຍນຳໃຊ້ອຸປະກອນໃດໜຶ່ງກໍໄດ້ | 68.9 |
| SR.9 | ການໃຊ້ຄອມພິວເຕີ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ນຳໃຊ້ຄອມພິວເຕີໃນໄລຍະ 3 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>8.8<br>11.3 |
| SR.10 | ກຳມະສິດໂທລະສັບມືຖື | 5.b.1 | ອັດຕາສ່ວນຮ້ອຍຂອງ ແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ຖືຄອງໂທລະສັບມືຖື<br>ແມ່ຍິງ<br>ຜູ້ຊາຍ | <br><br>79.3<br>80.8 |
| SR.11 | ການນຳໃຊ້ໂທລະສັບມືຖື | | ອັດຕາສ່ວນຮ້ອຍຂອງ ແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ນຳໃຊ້ໂທລະສັບມືຖືໃນໄລຍະ 3 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>84.3<br>84.5 |

[4] ຕົວຊີ້ບອກເປົ້າໝາຍການພັດທະນາແບບຍືນຍົງ (SDG), http://unstats.un.org/sdgs/indicators/indicators-list/. ທີມງານເຮັດວຽກ ປພຍ (SDG) ລະດັບສາກົນແມ່ນໄດ້ສືບຕໍ່ປັບປຸງສຳນວນຂໍ້ມູນຂ່າວສານຂອງຕົວຊີ້ບອກ ປພຍ (SDG) ແລະ ເຮັດໃຫ້ບັນຊີຕົວຊີ້ບອກ ປພຍ (SDG) ໄດ້ຮັບການປ່ຽນແປງ. ການສຳຫຼວດສຸຂະພາບແມ່ ແລະ ເດັກ (MICS) ກໍ່ໄດ້ກວມເອົາຫຼາຍຕົວຊີ້ບອກຂອງ ປພຍ (SDG ) ເຊິ່ງມີຄຳນິຍາມເປັນອັນດຽວກັນກັບສາກົນ, ໃນຂະນະດຽວກັນຍັງມີບາງຕົວຊີ້ບອກທີ່ກວມເອົານິຍາມຂອງການສຳຫຼວດແມ່ ແລະ ເດັກ (MICS) ຊຶ່ງກໍລະນີເຫຼົ່ານັ້ນແມ່ນຈະຖືກສະແດງໄວ້ໃນຕາຕະລາງຕາມວິທີວິທະຍາຂອງສາກົນ ໂດຍອີງໃສ່ບັນດາຕົວຊີ້ວັດຂອງການສຳຫຼວດສຸຂະພາບ ແມ່ ແລະ ເດັກ ແລະ/ຫຼື ເປັນສ່ວນໜຶ່ງທີ່ສາມາດເຊື່ອມໂຍງໃສ່ຕົວຊີ້ວັດຂອງການສຳຫຼວດແມ່ ແລະ ເດັກ (MICS) ແລະ ຕົວຊີ້ວັດ ປພຍ (SDG) ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສຳນວນຂໍ້ມູນຂ່າວສານຂອງຕົວຊີ້ບອກ ປພຍ (SDG) ສາມາດເຂົ້າເບິ່ງໄດ້ທີ່ http://unstats.un.org/sdgs/metadata/

[5] ບັນດາຕົວຊີ້ບອກຂອງ MICS ແມ່ນຈັດແບ່ງຕາມລະດັບຄວາມຮັ່ງມີ, ເພດ, ອາຍຸ, ຊົນເຜົ່າ, ສະຖານະພາບການເຄື່ອນຍ້າຍຖິ່ນຖານ, ຄວາມເປັນພິການ ແລະ ພູມສັນຖານ ຫຼື ຄຸນລັກສະນະອື່ນໆ ຈາກການແນະນຳຂອງທີມງານເຮັດວຽກ ປພຍ (SDG) ລະດັບສາກົນ: http://unstats.un.org/sdgs/indicators/Official%20List%20of%20Proposed%20SDG%20Indicators.pdfposed%20SDG%20Indicators.pdf

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| SR.12a<br>SR.12b | ການນຳໃຊ້ອິນເຕີເນັດ | 17.8.1 | ອັດຕາສ່ວນຮ້ອຍຂອງ ແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ນຳໃຊ້ອິນເຕີເນັດ<br>ແມ່ຍິງ<br>(a) ໃນໄລຍະ 3 ເດືອນຜ່ານມາ<br>(b) ນຳໃຊ້ອິນເຕີເນັດຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ ໃນໄລຍະ 3 ເດືອນຜ່ານມາ<br>ຜູ້ຊາຍ<br>(a) ໃນໄລຍະ 3 ເດືອນຜ່ານມາ<br>(b) ນຳໃຊ້ອິນເຕີເນັດຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ ໃນໄລຍະ 3 ເດືອນຜ່ານມາ | <br><br><br>57.0<br>54.8<br><br>61.0<br>58.7 |
| SR.13a<br>SR.13b | ທັກສະການນຳໃຊ້ເຕັກໂນໂລຢີໃນການສື່ສານ (ICT) | 4.4.1 | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ທີ່ເຄີຍເຮັດຢ່າງໜ້ອຍ ໜຶ່ງກິດຈະກຳ ຈາກ ເກົ້າກິດຈະກຳທີ່ກ່ຽວຂ້ອງກັບຄອມພິວເຕີ<br>ແມ່ຍິງ<br>(a) ອາຍຸ 15-24<br>(b) ອາຍຸ 15-49<br>ຜູ້ຊາຍ<br>(a) ອາຍຸ 15-24<br>(b) ອາຍຸ 15-49 | <br><br><br>7.2<br>8.1<br><br>8.3<br>10.9 |
| SR.14a | ການສູບຢາ | 3.a.1 | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ສູບຢາ ຫຼື ນຳໃຊ້ຜະລິດຕະພັນຢາສູບແບບມີຄວັນ ຫຼື ບໍ່ມີຄວັນໃນໄລຍະ 1 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>3.8<br>36.8 |
| SR.14b | ບໍ່ສູບຢາ | 3.8.1 | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ບໍ່ສູບຢາ ຫຼື ບໍ່ນຳໃຊ້ຜະລິດຕະພັນຢາສູບແບບມີຄວັນ ຫຼື ບໍ່ມີຄວັນໃນໄລຍະ 1 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>96.4<br>63.0 |
| SR.15 | ສູບຢາກ່ອນອາຍຸ 15 ປີ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ສູບຢາໝົດກອກກ່ອນອາຍຸ 15 ປີ<br>ແມ່ຍິງ<br>ຜູ້ຊາຍ | <br><br>1.2<br>9.7 |
| SR.16 | ດື່ມເຫຼົ້າ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ດື່ມເຫຼົ້າໃນເວລາໃດໜຶ່ງໃນໄລຍະ 1 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>48.6<br>74.5 |
| SR.17 | ດື່ມເຫຼົ້າກ່ອນອາຍຸ 15 ປີ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີ ທີ່ດື່ມເຫຼົ້າຢ່າງໜ້ອຍ 1 ຊະນິດກ່ອນອາຍຸ 15 ປີ<br>ແມ່ຍິງ<br>ຜູ້ຊາຍ | <br><br>9.6<br>14.4 |
| SR.18 | ການຈັດສັນທີ່ຢູ່ອາໄສຂອງເດັກ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 0-17 ປີ ທີ່ອາໄສຢູ່ກັບພໍ່ ຫຼື ແມ່ໂດຍກຳເນີດ | 9.1 |
| SR.19 | ອັດຕາສ່ວນຮ້ອຍຂອງເດັກທີ່ກຳພ້າພໍ່ ຫຼື ແມ່ ຫຼື ທັງສອງ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 0-17 ປີ ທີ່ພໍ່ ຫຼື ແມ່ເສຍຊີວິດ ຫຼື ທັງສອງ | 4.5 |
| SR.20 | ເດັກທີ່ມີພໍ່ ຫຼື ແມ່ອາໄສຢູ່ຕ່າງປະເທດ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 0-17 ປີ ທີ່ມີພໍ່ ຫຼື ແມ່ອາໄສຢູ່ຕ່າງປະເທດ | 5.8 |



# ການຕາຍ
# ໃນໄວເດັກ

© UNICEF Laos

## ການຕາຍໃນໄວເດັກ[6]

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| CS.1 | ອັດຕາການຕາຍຂອງເດັກເກີດໃໝ່ | 3.2.2 | ຄວາມເປັນໄປໄດ້ຂອງການຕາຍພາຍໃນເດືອນທຳອິດຂອງຊີວິດ (ຕໍ່ເດັກເກີດມີຊີວິດ 1,000 ຄົນ) | 12 |
| CS.2 | ອັດຕາການຕາຍຂອງເດັກຫຼັງເກີດ | | ຄວາມແຕກຕ່າງລະຫວ່າງອັດຕາການຕາຍຂອງເດັກອ່ອນ ແລະ ອັດຕາການຕາຍຂອງເດັກເກີດໃໝ່ (ຕໍ່ເດັກເກີດມີຊີວິດ 1,000 ຄົນ) | 13 |
| CS.3 | ອັດຕາການຕາຍຂອງເດັກອ່ອນ | | ຄວາມເປັນໄປໄດ້ຂອງການຕາຍໃນຊ່ວງລະຫວ່າງມື້ເກີດຫາຄົບຮອບວັນເກີດຄັ້ງທຳອິດ (ຕໍ່ເດັກເກີດມີຊີວິດ 1,000 ຄົນ) | 25 |
| CS.4 | ອັດຕາການຕາຍຂອງເດັກ | | ຄວາມເປັນໄປໄດ້ຂອງການຕາຍໃນຊ່ວງລະຫວ່າງມື້ຄົບຮອບວັນເກີດ 1 ປີ ແລະ ມື້ຄົບຮອບວັນເກີດ 5 ປີ<br>(ຕໍ່ຈຳນວນເດັກ 1,000 ຄົນ ອາຍຸ 1 ປີ) | 3 |
| CS.5 | ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 5 ປີ | 3.2.1 | ຄວາມເປັນໄປໄດ້ຂອງການຕາຍໃນຊ່ວງລະຫວ່າງມື້ເກີດ ແລະ ມື້ຄົບຮອບວັນເກີດ 5 ປີ (ຕໍ່ເດັກເກີດມີຊີວິດ 1,000 ຄົນ) | 28 |

[6] ຕົວຊີ້ບອກການຕາຍແມ່ນຖືກຄິດໄລ່ໃນໄລຍະ 5 ປີ



# ການຈະເລີນພັນ ແລະ ສຸຂະພາບຂອງແມ່

© UNICEF Laos

## ການຈະເລີນພັນ ແລະ ສຸຂະພາບຂອງແມ່

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TM.1 | ອັດຕາການເກີດລູກຂອງໄວໜຸ່ມ | 3.7.2 | ອັດຕາການຈະເລີນພັນສະເພາະໝວດອາຍຸສຳລັບແມ່ຍິງອາຍຸ 15-19 ປີ | 89 |
| TM.2 | ການເກີດລູກກ່ອນໄວອັນຄວນ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 20-24 ປີທີ່ເຄີຍເກີດລູກມີຊີວິດກ່ອນອາຍຸ 18 ປີ | 17.4 |
| TM.3 | ອັດຕາການນຳໃຊ້ວິທີຄຸມກຳເນີດ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ແຕ່ງງານແລ້ວ ຫຼື ຢູ່ຮ່ວມກັນ (ຫຼື ຄູ່ສົມລົດ) ທີ່ໃຊ້ການຄຸມກຳເນີດ (ແບບທັນສະໄໝ ຫຼື ແບບທຳມະຊາດ) | 53.1 |
| TM.4 | ນຳໃຊ້ວິທີການຄຸມກຳເນີດແບບທັນສະໄໝໃນການວາງແຜນຄອບຄົວ | 3.7.1 &<br>3.8.1 | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ແຕ່ງງານແລ້ວ ຫຼື ຢູ່ຮ່ວມກັນທີ່ນຳໃຊ້ວິທີການຄຸມກຳເນີດແບບທັນສະໄໝໃນການວາງແຜນຄອບຄົວ | 74.8 |
| TM.5a<br>TM.5b<br>TM.5c | ການປົກຄຸມຂອງການດູແລກ່ອນເກີດ | 3.8.1 | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ໄດ້ໄປຝາກທ້ອງໃນໄລຍະຖືພາຄັ້ງສຸດທ້າຍ<br>(a) ຢ່າງໜ້ອຍ 1 ຄັ້ງກັບພະນັກງານແພດທີ່ຊຳນານ<br>(b) ຢ່າງໜ້ອຍ 4 ຄັ້ງຂອງຜູ້ໃຫ້ບໍລິການໃດໜຶ່ງ<br>(c) ຢ່າງໜ້ອຍ 8 ຄັ້ງຂອງຜູ້ໃຫ້ບໍລິການໃດໜຶ່ງ | <br>89.8<br>71.6<br>20.4 |
| TM.6 | ອົງປະກອບໃນການດູແລໄລຍະກ່ອນເກີດ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ເຄີຍໄດ້ຮັບການວັດແທກຄວາມດັນເລືອດ, ໄດ້ກວດເລືອດ ແລະ ກວດນ້ຳຍ່ຽວ ໃນໄລຍະຖືພາຄັ້ງສຸດທ້າຍ | 52.5 |
| TM.7 | ການປ້ອງກັນບາດທະຍັກສຳລັບເດັກເກີດໃໝ່ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ເຄີຍໄດ້ຮັບວັກຊີນປ້ອງກັນບາດທະຍັກ ຢ່າງໜ້ອຍ 2 ຄັ້ງໃນໄລຍະຫ່າງທີ່ເໝາະສົມ[7] ກ່ອນການເກີດລູກຄັ້ງສຸດທ້າຍ | 42.3 |
| TM.8 | ການເກີດລູກໃນສະຖານທີ່ສາທາລະສຸກ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາທີ່ເກີດລູກຢູ່ສະຖານທີ່ບໍລິການສາທາລະນະສຸກ | 78.2 |
| TM.9 | ການເກີດລູກກັບແພດທີ່ຊຳນານ | 3.1.2 | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາທີ່ໄດ້ເກີດລູກນຳພະນັກງານແພດທີ່ຊຳນານ | 79.8 |
| TM.10 | ການເກີດລູກໂດຍການຜ່າຕັດ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາທີ່ເກີດລູກໂດຍການຜ່າຕັດ | 7.4 |
| TM.11 | ການຊັ່ງນ້ຳໜັກຂອງເດັກທັນທີທີ່ເກີດ | | ອັດຕາສ່ວນຮ້ອຍຂອງການເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາທີ່ໄດ້ມີການຊັ່ງນ້ຳໜັກຂອງເດັກໃນເວລາເກີດ | 80.9 |
| TM.12 | ການນອນພັກຟື້ນຫຼັງເກີດລູກໃນສະຖານທີ່ບໍລິການສາທາລະນະສຸກ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ເກີດລູກມີຊີວິດໃນໄລຍະ 2 ປີຜ່ານມາທີ່ພັກຟື້ນຫຼັງເກີດໃນສະຖານທີ່ບໍລິການສາທາລະນະສຸກເປັນເວລາ 12 ຊົ່ວໂມງ ຫຼື ຫຼາຍກວ່າ ຫຼັງຈາກການເກີດຄັ້ງສຸດທ້າຍ | 85.4 |
| TM.13 | ການກວດສຸຂະພາບຂອງເດັກເກີດໃໝ່ຫຼັງການເກີດ | | ອັດຕາສ່ວນຮ້ອຍຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ໄດ້ຮັບການກວດສຸຂະພາບໃນສະຖານທີ່ບໍລິການສາທາລະນະສຸກ, ຢູ່ເຮືອນ ຫຼື ໄດ້ຮັບການກວດສຸຂະພາບ ຫຼື ຢ້ຽມຢາມດູແລຫຼັງການເກີດພາຍໃນ 2 ມື້. | 64.0 |
| TM.14 | ການເຮັດໃຫ້ເດັກເກີດໃໝ່ໂຕແຫ້ງ | | ອັດຕາສ່ວນຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ໄດ້ມີການເຮັດໃຫ້ເດັກເກີດໃໝ່ໂຕແຫ້ງຫຼັງການເກີດ | 84.6 |

[7] ລາຍລະອຽດໃຫ້ເບິ່ງຕາຕະລາງຂອງ MICS

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TM.15 | ການດູແລແບບໜັງສຳຜັດໜັງ(ເອົາເດັກສຳຜັດກັບໜ້າເອິກແມ່ໂດຍບໍ່ມີສິ່ງກີດຂວາງ) | | ອັດຕາສ່ວນຮ້ອຍຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາທີ່ເດັກເກີດໃໝ່ໄດ້ສຳຜັດກັບເອິກແມ່ຫຼັງເກີດ | 13.7 |
| TM.16 | ເດັກຫຼັງເກີດໄດ້ຮັບການອາບນ້ຳ | | ອັດຕາສ່ວນຮ້ອຍຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາທີ່ ເດັກເກີດໃໝ່ໄດ້ອາບນ້ຳຫຼັງເກີດຫລາຍກວ່າ 24 ຊົ່ວໂມງ | 60.5 |
| TM.17 | ການຕັດສາຍແຮ່ດ້ວຍເຄື່ອງມືທີ່ສະອາດ | | ອັດຕາສ່ວນຮ້ອຍຂອງການເກີດມີຊີວິດນອກສະຖານທີ່ບໍລິການສາທາລະນະສຸກໃນໄລຍະ 2 ປີຜ່ານມາ ທີ່ໄດ້ນຳໃຊ້ມີດໃໝ່ ຫຼື ເຄື່ອງມືທີ່ຕົ້ມແລ້ວໃນການຕັດສາຍແຮ່ | 30.5 |
| TM.18 | ບໍ່ໄດ້ນຳໃຊ້ສິ່ງອັນຕະລາຍໃສ່ສາຍແຮ່ | | ອັດຕາສ່ວນຮ້ອຍຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາທີ່ບໍ່ໄດ້ມີການນຳໃຊ້ສິ່ງທີ່ເປັນອັນຕະລາຍຕໍ່ສາຍແຮ່ | 79.3 |
| TM.19 | ການກວດສັນຍານໜ້າທີ່ການເຮັດວຽກຫຼັງການເກີດ[8] | | ອັດຕາສ່ວນຮ້ອຍຂອງເດັກເກີດມີຊີວິດໃນໄລຍະ 2 ປີຜ່ານມາ ທີ່ເດັກເກີດໃໝ່ໄດ້ຮັບການກວດສັນຍານໜ້າທີ່ການເຮັດວຽກຫຼັງການເກີດຢ່າງໜ້ອຍ 2 ຄັ້ງພາຍໃນ 2 ມື້ | 32.6 |
| TM.20 | ການກວດສຸຂະພາບຂອງແມ່ຫຼັງເກີດລູກ | | ອັດຕາສ່ວນຮ້ອຍຂອງຜູ້ຍິງອາຍຸ 15-49 ປີ ທີ່ໄດ້ຮັບການກວດສຸຂະພາບຫຼັງການເກີດລູກ ໃນສະຖານທີ່ບໍລິການສາທາລະນະສຸກ ຫຼື ຢູ່ເຮືອນ ຫຼື ການຢ້ຽມຢາມຫຼັງເກີດ ພາຍໃນ 2 ວັນຫຼັງການກເກີດຄັ້ງທ້າຍສຸດ | 64.2 |
| TM.22 | ການມີເພດສຳພັນກັບຄູ່ນອນຫຼາຍຄົນ | | ອັດຕາສ່ວນຮ້ອຍຂອງປະຊາກອນອາຍຸ 15-49 ປີທີ່ມີເພດສຳພັນກັບຄູ່ນອນຫຼາຍກວ່າ 1 ຄົນໃນໄລຍະ 12 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br><br>0.4<br>4.1 |
| TM.23 | ການນຳໃຊ້ຖົງຢາງອະນາໄມໃນການມີເພດສຳພັນຄັ້ງສຸດທ້າຍກັບຄູ່ນອນຫຼາຍຄົນ | | ອັດຕາສ່ວນຮ້ອຍຂອງປະຊາກອນອາຍຸ 15-49 ປີທີ່ມີຄູ່ນອນຫຼາຍຄົນໃນໄລຍະ 12 ເດືອນຜ່ານມາ ທີ່ໄດ້ບອກວ່າໄດ້ນຳໃຊ້ຖົງຢາງອະນາໄມໃນການມີເພດສຳພັນຄັ້ງສຸດທ້າຍ<br>ແມ່ຍິງ<br>ຜູ້ຊາຍ | <br><br><br>46.4<br>43.6 |
| TM.24 | ການມີເພດສຳພັນຂອງໄວໜຸ່ມກ່ອນອາຍຸ 15 ປີ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມອາຍຸ 15-24 ປີ ທີ່ມີເພດສຳພັນກ່ອນອາຍຸ 15 ປີ<br>ແມ່ຍິງ<br>ຜູ້ຊາຍ | <br><br>5.5<br>2.8 |
| TM.25 | ໄວໜຸ່ມທີ່ບໍ່ເຄີຍມີເພດສຳພັນ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ ທີ່ບໍ່ເຄີຍແຕ່ງງານ ແລະ ບໍ່ທັນເຄີຍມີເພດສຳພັນ<br>ແມ່ຍິງ<br>ຜູ້ຊາຍ | <br><br>82.6<br>63.3 |
| TM.26 | ອາຍຸຂອງຄູ່ນອນ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-24 ປີ ທີ່ມີເພດສຳພັນກັບຄູ່ນອນທີ່ມີອາຍຸລື່ນລາວ 10 ປີ ຫຼື ຫຼາຍກວ່າ ໃນໄລຍະ 12 ເດືອນຜ່ານມາ | 9.2 |

[8] ສັນຍານໜ້າທີ່ການເຄື່ອນເໜັງມີ 1) ກວດສາຍແຮ່, 2) ປຶກສາກ່ຽວກັບສັນຍານອັນຕະລາຍ, 3) ກວດອຸນຫະພູມ, 4) ສັງເກດ/ໃຫ້ຄຳປຶກສາການລ້ຽງລູກດ້ວຍນົມແມ່, ແລະ 5) ຊັ່ງນໍ້າໜັກເດັກ (ສຳລັບບ່ອນທີ່ມີ)

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TM.27 | ການມີເພດສຳພັນກັບຄູ່ນອນທີ່ບໍ່ແມ່ນຄູ່ນອນປະຈຳ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ ມີເພດສຳພັນໃນໄລຍະ 12 ເດືອນຜ່ານມາ ກັບຄູ່ນອນທີ່ບໍ່ແມ່ນຄູ່ສົມລົດ ຫຼື ຢູ່ນຳກັນໂດຍບໍ່ໄດ້ແຕ່ງງານ<br>ແມ່ຍິງ<br>ຜູ້ຊາຍ | <br>16.0<br>48.7 |
| TM.28 | ການໃຊ້ຖົງຢາງອະນາໄມກັບຄູ່ນອນທີ່ບໍ່ແມ່ນຄູ່ນອນປະຈຳ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ ທີ່ໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນຄັ້ງສຸດທ້າຍ ກັບຄູ່ນອນທີ່ບໍ່ແມ່ນຄູ່ສົມລົດ ຫຼື ຢູ່ນຳກັນໂດຍບໍ່ໄດ້ແຕ່ງງານ ໃນໄລຍະ 12 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br>46.0<br>56.9 |
| TM.29 | ຄວາມຮູ້ກ່ຽວກັບການປ້ອງກັນການຕິດເຊື້ອເຮສໄອວີຂອງໄວໜຸ່ມ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ ທີ່ຮູ້ຈຳແນກວິທີປ້ອງກັນການການຕິດເຊື້ອເຮສໄອວີຢ່າງຖືກຕ້ອງ ແລະ ຮູ້ປະຕິເສດການເຂົ້າໃຈຜິດກ່ຽວກັບກັນຕິດເຊື້ອເຮສໄອວີ[9]<br>ແມ່ຍິງ<br>ຜູ້ຊາຍ | <br>20.1<br>23.1 |
| TM.30 | ຄວາມຮູ້ກ່ຽວກັບການຕິດເຊື້ອເຮສໄອວີຈາກແມ່ - ລູກ | | ອັດຕາສ່ວນຮ້ອຍຂອງປະຊາກອນ ອາຍຸ 15-24 ປີ ທີ່ສາມາດຈຳແນກໄດ້ຢ່າງຖືກຕ້ອງຂອງທັງສາມວິທີ[10] ໃນການຕິດເຊື້ອເຮສໄອວີຈາກແມ່ຫາ ລູກ<br>ແມ່ຍິງ<br>ຜູ້ຊາຍ | <br>34.4<br>34.2 |
| TM.31 | ທັດສະນະຄະຕິຕໍ່ຜູ້ຕິດເຊື້ອເຮສໄອວີ | | ອັດຕາສ່ວນຮ້ອຍຂອງປະຊາກອນ ອາຍຸ 15-24 ປີ ທີ່ເຄີຍໄດ້ຍິນມີການຈຳແນກລັງກຽດຕໍ່ຜູ້ຕິດເຊື້ອເຮສໄອວີແລະ ໄດ້ສະແດງທັດສະນະຄະຕິໃນການຍອມຮັບ[11] ຜູ້ຕິດເຊື້ອເຮສໄອວີ<br>ແມ່ຍິງ<br>ຜູ້ຊາຍ | <br>48.5<br>51.6 |
| TM.32 | ປະຊາກອນທີ່ຮູ້ສະຖານທີ່ກວດຊອກຫາເຊື້ອເຮສໄອວີ | | ອັດຕາສ່ວນຮ້ອຍຂອງປະຊາກອນ ອາຍຸ 15-24 ປີທີ່ຮູ້ກ່ຽວກັບສະຖານທີ່ກວດຊອກຫາເຊື້ອເຮສໄອວີ<br>ແມ່ຍິງ<br>ຜູ້ຊາຍ | <br>18.5<br>25.6 |
| TM.33 | ປະຊາກອນທີ່ເຄີຍກວດຊອກຫາເຊື້ອເຮສໄອວີ ແລະ ໄດ້ຮັບຜົນຂອງການກວດ | | ອັດຕາສ່ວນຮ້ອຍຂອງປະຊາກອນ ອາຍຸ 15-24 ປີທີ່ເຄີຍກວດຊອກຫາເຊື້ອເຮສໄອວີ ແລະ ໄດ້ຮັບຜົນຂອງການກວດຂອງຕົນໃນໄລຍະ 12 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br>1.0<br>0.3 |
| TM.34 | ໄວໜຸ່ມທີ່ຢູ່ໃນໄວມີເພດສຳພັນເຄີຍກວດຊອກຫາເຊື້ອເຮສໄອວີ ແລະ ໄດ້ຮູ້ຜົນຂອງການກວດ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ ທີ່ມີເພດສຳພັນໃນໄລຍະ 12 ເດືອນຜ່ານມາທີ່ໄດ້ກວດຊອກຫາເຊື້ອເຮສໄອວີ ແລະ ໄດ້ຮູ້ຜົນຂອງການກວດຂອງຕົນໃນໄລຍະ 12 ເດືອນຜ່ານມາ<br>ແມ່ຍິງ<br>ຜູ້ຊາຍ | <br>1.6<br>0.3 |

[9] ການນຳໃຊ້ຖົງຢາງອະນາໄມ ແລະ ຊື່ສັດຕໍ່ຄູ່ນອນ ແລະ ບໍ່ໄດ້ຕິດເຊື້ອ

[10] ການຕິດເຊື້ອໃນໄລຍະຖືພາ, ເກີດລູກ ແລະ ລ້ຽງລູກດ້ວຍນົມແມ່

[11] ແມ່ຍິງທີ່ຕອບວ່າ ບໍ່ ໃນ 2 ຄຳຖາມໃດໜຶ່ງຕໍ່ໄປນີ້: 1) ເຈົ້າຈະຊື້ຜັກສົດຈາກເຈົ້າຂອງຮ້ານ ຫຼື ຜູ້ຂາຍໆທີ່ເຈົ້າຮູ້ວ່າລາວຕິດເຊື້ອເຮສໄອວີ ຫຼື ບໍ່? 2) ເຈົ້າຄິດວ່າເດັກນ້ອຍທີ່ຕິດເຊື້ອເຮສໄອວີສາມາດເຂົ້າໂຮງຮຽນຮ່ວມກັບເດັກນ້ອຍຄົນອື່ນທີ່ບໍ່ໄດ້ຕິດເຊື້ອຫຼືບໍ່?

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TM.35a<br>TM.35b | ການໃຫ້ຄຳປຶກສາ ກ່ຽວກັບການຕິດເຊື້ອເຮສໄອວີໃນໄລຍະດູແລກ່ອນເກີດ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີ ທີ່ເກີດລູກມີຊີວິດ ໃນ 2 ປີຜ່ານມາ ໄດ້ຮັບການກວດດູແລກ່ອນເກີດໃນເວລາຖືພາ ແລະ ໄດ້ບອກວ່າໄດ້ຮັບການບໍລິການຢູ່ຫ້ອງກວດການດູແລກ່ອນເກີດ ດັ່ງນີ້:<br>(a) ການໃຫ້ຄຳປຶກສາແນະນຳກ່ຽວກັບເຮສໄອວີ<br>(b) ຂໍ້ມູນ ຫຼື ການປຶກສາແນະນຳກ່ຽວກັບເຮສໄອວີຫຼັງຈາກໄດ້ຮັບຜົນກວດການຊອກຫາເຊື້ອເຮສໄອວີ | 7.9<br>6.0 |
| TM.36 | ການກວດຊອກຫາເຊື້ອເຮສໄອວີໃນໄລຍະຖືພາ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີ ທີ່ເກີດລູກມີຊີວິດໃນ 2 ປີຜ່ານມາ ໄດ້ຮັບການກວດດູແລກ່ອນເກີດ ໃນເວລາຖືພາຄັ້ງສຸດທ້າຍໄດ້ບອກວ່າເຂົາເຈົ້າຖືກສະເໜີໃຫ້ກວດ ແລະ ຍອມຮັບຜົນການກວດຊອກຫາເຊື້ອເຮສໄອວີໃນໄລຍະຖືພາ | 8.5 |



# ການຈະເລີນເຕີບໂຕຂອງເດັກ ສຸຂະພາບ, ໂພຊະນາການ ແລະ ການພັດທະນາ

© UNICEF Laos

## ການຈະເລີນເຕີບໂຕຂອງເດັກ - ສຸຂະພາບ, ໂພຊະນາການ ແລະ ການພັດທະນາ

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TC.1 | ການປົກຄຸມການສັກວັກ ຊີນກັນພະຍາດວັນນະໂລກ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບວັກຊີນ ກັນພະຍາດວັນນະໂລກ (BCG) ກ່ອນມື້ຄົບຮອບວັນເກີດ 1 ປີ | 74.1 |
| TC.2 | ການປົກຄຸມຂອງການໃຫ້ວັກຊີນກັນພະຍາດໂປລິໂອ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບການຢອດວັກຊີນກັນພະຍາດໂປລິໂອ (OPV) 3 ຄັ້ງ ກ່ອນມື້ຄົບຮອບວັນເກີດ 1 ປີ | 53.2 |
| TC.3 | ການປົກຄຸມຂອງການສັກວັກຊີນກັນພະຍາດຄໍຕີບ, ໄອໄກ່ ແລະ ບາດທະຍັກ | 3.b.1 & 3.8.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບວັກຊີນກັນພະຍາດຄໍຕີບ, ໄອໄກ່ ແລະ ບາດທະຍັກ DPT 3 ຄັ້ງ ກ່ອນມື້ຄົບຮອບວັນເກີດ 1 ປີ | 61.3 |
| TC.4 | ການປົກຄຸມຂອງການສັກວັກຊີນກັນພະຍາດ ອັກເສບຕັບ ບີ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບວັກຊີນກັນພະຍາດອັກເສບຕັບບີ (HepB3) 4 ຄັ້ງ ກ່ອນມື້ຄົບຮອບວັນເກີດ 1 ປີ | 61.3 |
| TC.5 | ການປົກຄຸມຂອງການສັກວັກຊີນ ໄຂ້ຫວັດເຮໂມຟີລຸຍຊະນິດ B (Hib) | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບວັກຊີນໂມຟີລຸຍຊະນິດ B 3 ຄັ້ງ ກ່ອນມື້ຄົບຮອບວັນເກີດ 1 ປີ | 61.3 |
| TC.6 | ການປົກຄຸມຂອງການສັກວັກຊີນກັນພະຍາດປອດອັກເສບ Pneumococcal (Conjugate) | 3.b.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບ ວັກຊີນກັນພະຍາດປອດອັກເສບ (PCV3) 3 ຄັ້ງ ກ່ອນມື້ຄົບຮອບວັນເກີດ 1 ປີ | 55.8 |
| TC.8 | ການປົກຄຸມຂອງການສັກວັກຊີນກັນພະຍາດໝາກແດງນ້ອຍ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-23 ເດືອນທີ່ໄດ້ຮັບວັກຊີນກັນພະຍາດໝາກແດງນ້ອຍກ່ອນມື້ຄົບຮອບວັນເກີດ 1 ປີ | 62.2 |
| TC.9 | ໂຣກສະໝອງອັກເສບຍີ່ປຸ່ນ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 24-35 ເດືອນທີ່ໄດ້ຮັບວັກຊີນກັນພະຍາດ ໂຣກສະໝອງອັກເສບຍີ່ປຸ່ນນ້ອຍກ່ອນມື້ຄົບຮອບວັນເກີດ 1 ປີ | 55.9 |
| TC10 | ການປົກຄຸມຂອງການສັກວັກຊີນກັນພະຍາດໝາກແດງ[12] | 3.b.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸ 24-35 ເດືອນທີ່ໄດ້ຮັບວັກຊີນກັນພະຍາດໝາກແດງກ່ອນມື້ຄົບຮອບວັນເກີດ 1 ປີ | 52.0 |
| TC.11a<br>TC.11b | ການປົກຄຸມຂອງການສັກວັກຊີນກັນພະຍາດຄົບ[12] | | ອັດຕາສ່ວນຮ້ອຍຂອງເດັກອາຍຸ<br>a)12-23 ເດືອນທີ່ໄດ້ຮັບວັກຊີນຕາມຄຳແນະນຳຂອງຕາຕະລາງການສັກຢາກັນພະຍາດແຫ່ງຊາດ ກ່ອນມື້ຄົບຮອບວັນເກີດ 1 ປີ.<br>b)24-35 ເດືອນທີ່ໄດ້ຮັບວັກຊີນຕາມຄຳແນະນຳຂອງຕາຕະລາງການສັກຢາກັນພະຍາດແຫ່ງຊາດ ກ່ອນມື້ຄົບຮອບວັນເກີດ 1 ປີ. | 47.0<br>37.0 |
| TC.12 | ການປິ່ນປົວພະຍາດຖອກທ້ອງ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ເປັນພະຍາດຖອກທ້ອງໃນ 2 ອາທິດຜ່ານມາ ແລະ ໄດ້ຮັບການປິ່ນປົວຈາກສະຖານທີ່ບໍລິການສາທາລະນະສຸກ | 58.0 |
| TC.13a<br>TC.13b | ການປິ່ນປົວພະຍາດຖອກທ້ອງໂດຍການໃຫ້ນ້ຳທະເລຝຸ່ນທາງປາກ (ORS) ແລະ ທາດສັງກະສີ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ເປັນພະຍາດຖອກທ້ອງໃນ 2 ອາທິດຜ່ານມາ ແລະ ໄດ້ຮັບ<br>a) ນ້ຳທະເລຝຸ່ນທາງປາກ (ORS)<br>b) ນ້ຳທະເລຝຸ່ນທາງປາກ (ORS) ແລະ ທາດສັງກະສີ | 67.6<br>19.9 |

[12] ວັກຊີນພື້ນຖານປະກອບມີ BCG, 3 ເຂັມຂອງພະຍາດໂປລິໂອ, DTP 3 ຄັ້ງ ແລະ ສັກວັກຊີນກັນພະຍາດໝາກແດງ 1 ເຂັມ. ການສັກຢາວັກຊີນທັງໝົດລວມມີການສັກຢາວັກຊີນທັງໝົດທີ່ແນະນຳໃຫ້ເດັກນ້ອຍຕ່ຳກວ່າ 2 ປີຢູ່ໃນຕາຕະລາງແຫ່ງຊາດ

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TC.14 | ການປິ່ນປົວພະຍາດຖອກທ້ອງໂດຍການທົດແທນນໍ້າທາງປາກ (ORT) ແລະ ສືບຕໍ່ໃຫ້ກິນອາຫານ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ເປັນພະຍາດຖອກທ້ອງໃນ 2 ອາທິດຜ່ານມາ ແລະ ໄດ້ຮັບ ORT (ນໍ້າທະເລຝຸ່ນເປັນຊອງ, ນໍ້າທະເລຝຸ່ນສໍາເລັດຮູບ, ນໍ້າທີ່ປຸງແຕ່ງໃນເຮືອນດັ່ງທີ່ໄດ້ແນະນໍາ) ແລະ ສືບຕໍ່ໃຫ້ກິນອາຫານໄລຍະທີ່ເປັນພະຍາດຖອກທ້ອງ | 69.2 |
| TC.15 | ການນໍາໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີຕ່າງໆ ທີ່ໃຊ້ໃນການແຕ່ງກິນ | | ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີ ທີ່ໃຊ້ໃນການແຕ່ງກິນ | 8.0 |
| TC.16 | ການນໍາໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີທີ່ໃຊ້ໃນການສ້າງອາຍອຸ່ນ | | ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີ ທີ່ໃຊ້ໃນການສ້າງອາຍອຸ່ນ | 3.5 |
| TC.17 | ການໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີໃນການສ້າງແສງສະຫວ່າງ | | ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີ ໃນການສ້າງແສງສະຫວ່າງ | 98.6 |
| TC.18 | ການໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີ ໃນການແຕ່ງກິນ, ການສ້າງອາຍອຸ່ນ ແລະ ການສ້າງແສງສະຫວ່າງ | 7.1.2 | ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໃຊ້ເຊື້ອໄຟຕົ້ນຕໍທີ່ສະອາດ ແລະ ເຕັກໂນໂລຊີ ໃນການແຕ່ງກິນ, ການສ້າງອາຍອຸ່ນ ແລະ ການສ້າງແສງສະຫວ່າງ | 7.5 |
| TC.19 | ການປິ່ນປົວເດັກທີ່ເປັນພະຍາດອັກເສບລະບົບຫາຍໃຈຮຸນແຮງ (ARI) | 3.8.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸຕໍ່າກວ່າ 5 ປີ ທີ່ເປັນພະຍາດອັກເສບລະບົບຫາຍໃຈຮຸນແຮງໃນ 2 ອາທິດຜ່ານມາ ແລະ ໄດ້ຮັບການປິ່ນປົວຈາກສະຖານທີ່ບໍລິການສາທາລະນະສຸກ | **(66.2)*** |
| TC.20 | ການປິ່ນປົວເດັກທີ່ເປັນພະຍາດອັກເສບລະບົບຫາຍໃຈຮຸນແຮງໂດຍການໃຊ້ຢາຕ້ານເຊື້ອ | | ອັດຕາສ່ວນຮ້ອຍຂອງເດັກອາຍຸຕໍ່າກວ່າ 5 ປີ ທີ່ເປັນພະຍາດອັກເສບລະບົບຫາຍໃຈຮຸນແຮງໃນ 2 ອາທິດຜ່ານມາ ແລະ ໄດ້ຮັບຢາຕ້ານເຊື້ອ | **(41.8)*** |
| TC.21a<br>TC.21b | ການມີມຸ້ງຍ້ອມຢາຂອງຄົວເຮືອນ (ITNs) | | ຄົວເຮືອນທີ່ມີມຸ້ງຍ້ອມຢາ:<br>(a) ຢ່າງໜ້ອຍ 1 ດາງ<br>(b) ຢ່າງໜ້ອຍ 1 ດາງຕໍ່ທຸກໆ 2 ຄົນ | 26.0<br>15.0 |
| TC.22 | ປະຊາກອນທີ່ນອນໃນມຸ້ງຍ້ອມຢາ | 3.8.1 | ອັດຕາສ່ວນຮ້ອຍຂອງສະມາຊິກໃນຄົວເຮືອນທີ່ສໍາພາດສໍາເລັດທີ່ນອນໃນມຸ້ງຍ້ອມຢາຄືນທີ່ຜ່ານມາ | 21.2 |
| TC.23 | ເດັກນ້ອຍອາຍຸຕໍ່າກວາ 5 ປີ ທີ່ນອນໃນມຸ້ງຍ້ອມຢາ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ໃນຄົວເຮືອນທີ່ສໍາພາດສໍາເລັດທີ່ນອນໃນມຸ້ງຍ້ອມຢາຄືນທີ່ຜ່ານມາ | 20.9 |
| TC.24 | ແມ່ຍິງຖືພາ ທີ່ນອນໃນມຸ້ງຍ້ອມຢາ | | ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາໃນຄົວເຮືອນທີ່ສໍາພາດສໍາເລັດທີ່ນອນໃນມຸ້ງຍ້ອມຢາຄືນທີ່ຜ່ານມາ | 17.3 |
| TC.26 | ການປິ່ນປົວໃນເວລາເປັນໄຂ້ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ເປັນໄຂ້ໃນ 2 ອາທິດຜ່ານມາໄດ້ຮັບການປິ່ນປົວຈາກສະຖານທີ່ບໍລິການສາທາລະນະສຸກ ຫຼື ຜູ້ໃຫ້ບໍລິການ | 62.8 |
| TC.27 | ການປິ່ນມະຕິໄຂ້ມາລາເລຍ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ເປັນໄຂ້ໃນ 2 ອາທິດຜ່ານມາ ທີ່ໄດ້ເຈາະເລືອດນິ້ວມື ຫຼື ສົ້ນບ່ອງເພື່ອກວດວິເຄາະຫາໄຂ້ມາລາເລຍ | **(6.6)*** |
| TC.28 | ການໃຊ້ຢາຕ້ານໄຂ້ມາລາເລຍສໍາລັບເດັກນ້ອຍອາຍຸຕໍ່າກວ່າ 5 ປີ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ເປັນໄຂ້ໃນ 2 ອາທິດຜ່ານມາ ທີ່ໄດ້ຮັບການປິ່ນປົວໂດຍການໃຊ້ຢາຕ້ານໄຂ້ມາລາເລຍ | **(2.6)*** |
| TC.29 | ການປິ່ນປົວດ້ວຍຢາເມັດຕ້ານໄຂ້ມາລາເລຍໃນບັນດາເດັກນ້ອຍ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ເປັນໄຂ້ໃນ 2 ອາທິດຜ່ານມາ ທີ່ໄດ້ຮັບຢາເມັດຕ້ານໄຂ້ມາລາເລຍ ແລະ ໄດ້ຮັບ ACT (ຫຼື ການປິ່ນປົວຂັ້ນຕົ້ນຕາມນະໂຍບາຍແຫ່ງຊາດ) | **(75.0)*** |

* ອີງຕາມກໍລະນີຈໍານວນຜູ້ຕອບສໍາພາດ 25-49 ຄົນ ໂດຍບໍ່ໃຊ້ນໍ້າໜັກ

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TC.30 | ເດັກທີ່ເຄີຍໄດ້ກິນນົມແມ່ | | ອັດຕາສ່ວນຮ້ອຍແມ່ຍິງທີ່ໄດ້ເກີດລູກມີຊີວິດ ໃນໄລຍະ 2 ປີຜ່ານມາ ຜູ້ທີ່ໄດ້ລ້ຽງລູກດ້ວຍນົມແມ່ | 97.1 |
| TC.31 | ການລິເລີ່ມໃຫ້ລູກກິນນົມແມ່ ແຕ່ຫົວທີ | | ອັດຕາສ່ວນຮ້ອຍແມ່ຍິງເກີດລູກມີຊີວິດໃນໄລຍະ 2 ປີກ່ອນ ທີ່ໃຫ້ລູກແລກເກີດກິນນົມແມ່ພາຍໃນ 1 ຊົ່ວໂມງຫຼັງຈາກເກີດ | 44.9 |
| TC.32 | ການລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ ໃນເດັກຕໍ່າກວ່າ 6 ເດືອນ | | ອັດຕາສ່ວນຮ້ອຍຂອງເດັກເກີດໃໝ່ ອາຍຸຕໍ່າກວ່າ 6 ເດືອນ ທີ່ກິນນົມແມ່ພຽງຢ່າງດຽວ[13] | 50.6 |
| TC.33 | ການກິນນົມແມ່ເປັນສ່ວນໃຫຍ່ ຂອງເດັກອາຍຸຕໍ່າກວ່າ 6 ເດືອນ | | ອັດຕາສ່ວນຮ້ອຍຂອງເດັກເກີດໃໝ່ອາຍຸຕໍ່າກວ່າ 6 ເດືອນທີ່ກິນນົມແມ່ເປັນສ່ວນໃຫຍ່ໃນມື້ຜ່ານມາ[14] | 60.6 |
| TC.36 | ໄລຍະເວລາກິນນົມແມ່ | | ອາຍຸເດັກນ້ອຍ (ເປັນເດືອນ) ຂອງເດັກ 0-35 ເດືອນ, ທີ່ບໍ່ໄດ້ກິນນົມແມ່ ເຖິງ 50 ສ່ວນຮ້ອຍ ໃນມື້ທີ່ຜ່ານມາ | 14.3 |
| TC.37 | ການລ້ຽງລູກດ້ວຍນົມແມ່ໃນອາຍຸທີ່ເໝາະສົມ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍ ອາຍຸ 20-23 ເດືອນ ໄດ້ຮັບການລ້ຽງດູ ທີ່ເໝາະສົມ[15] ໃນມື້ທີ່ຜ່ານມາ | 45.7 |
| TC.38 | ການເລີ່ມໃຫ້ເດັກກິນອາຫານແຂງ, ເຄິ່ງແຂງ ຫຼື ອ່ອນ | | ອັດຕາສ່ວນຮ້ອຍຂອງເດັກອ່ອນ ອາຍຸ 6-8 ເດືອນທີ່ໄດ້ຮັບອາຫານອາຫານແຂງ, ເຄິ່ງແຂງ ຫຼື ອ່ອນ ໃນມື້ຜ່ານມາ | 78.3 |
| TC.39a<br>TC.39b | ຈຳນວນຄັ້ງຕໍ່າສຸດໃນການໃຫ້ອາຫານທີ່ສາມາດຮັບໄດ້ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 6-23 ເດືອນທີ່ໄດ້ຮັບອາຫານແຂງ, ເຄິ່ງແຂງ ຫຼື ອ່ອນ ໃນຈຳນວນຄັ້ງທີ່ໜ້ອຍສຸດ ຫຼື ຫຼາຍກວ່າ ພາຍໃນມື້ທີ່ຜ່ານມາ<br>(a) ເດັກທີ່ກິນດ້ວຍນົມແມ່<br>(b) ເດັກທີ່ບໍ່ໄດ້ກິນດ້ວຍນົມແມ່ | <br>23.3<br>32.9 |
| TC.40 | ຈຳນວນຄັ້ງໃຫ້ເດັກກິນນົມປະເພດອື່ນໆ ສຳລັບເດັກທີ່ບໍ່ໄດ້ກິນນົມແມ່ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 6-23 ເດືອນ ທີ່ບໍ່ໄດ້ກິນນົມແມ່ ໄດ້ໃຫ້ກິນນົມອື່ນໆ ຢ່າງໜ້ອຍ 2 ຄັ້ງ ໃນມື້ຜ່ານມາ | 58.9 |
| TC.41 | ຈຳນວນຄັ້ງໜ້ອຍສຸດທີ່ໃຫ້ເດັກກິນອາຫານທີ່ມີຄວາມຫຼາກຫຼາຍ | | ອັດຕາສ່ວນຮ້ອຍຂອງເດັກທີ່ບໍ່ໄດ້ຮັບນົມແມ່ ອາຍຸ 6-23 ເດືອນທີ່ໄດ້ກິນອາຫານຈາກ 4 ໝວດອາຫານ[16] ຫຼື ຫຼາຍກວ່າໃນມື້ຜ່ານມາ | 40.4 |
| TC.42 | ຈຳນວນຄັ້ງຕໍ່າສຸດ ໃນການໃຫ້ອາຫານ | | ອັດຕາສ່ວນຮ້ອຍ ຂອງເດັກ ອາຍຸ 6-23 ເດືອນທີ່ໄດ້ກິນອາຫານແຂງ, ເຄິ່ງແຂງ ຫຼື ອ່ອນ (ລວມທັງນົມອື່ນໆ ສຳລັບເດັກ ທີ່ບໍ່ໄດ້ກິນນົມແມ່) ໃນຈຳນວນຄັ້ງຕໍ່າສຸດ[17] ຫຼື ຫຼາຍກວ່າ ໃນມື້ຜ່ານມາ | 61.4 |

[13] ເດັກອ່ອນທີ່ໄດ້ກິນນົມແມ່, ແລະ ບໍ່ໄດ້ກິນທາດແຫຼວ ຫຼື ອາຫານອື່ນ ທີ່ຖືກຍົກເວັ້ນການໃຫ້ນ້ຳທົດແທນທາງປາກ, ວິຕະມິນ, ນ້ຳແຮ່ທາດເສີມ ແລະ ຢາ

[14] ເດັກອ່ອນທີ່ກິນນົມແມ່, ແລະ ທາດແຫຼວອື່ນ (ນ້ຳ, ເຄື່ອງດື່ມປະເພດນ້ຳ, ນ້ຳໝາກໄມ້, ການໃຫ້ນ້ຳທົດແທນທາງປາກ, ຢາຢອດ, ວິຕະມິນ, ເກືອແຮ່ ແລະ ຢາ) ແຕ່ບໍ່ໄດ້ກິນອາຫານອື່ນອີກ (ໂດຍສະເພາະນົມທີ່ບໍ່ແມ່ນນົມແມ່ ແລະ ທາດແຫຼວທີ່ເປັນອາຫານປະເພດອື່ນ)

[15] ເດັກອ່ອນອາຍຸ 0-5 ເດືອນທີ່ກິນນົມແມ່ຢ່າງດຽວ ແລະ ເດັກນ້ອຍອາຍຸ 6-23 ເດືອນທີ່ກິນນົມແມ່ ແລະ ອາຫານແຂງ, ອາຫານເຄິ່ງແຂງຫຼື ອາຫານອ່ອນອື່ນໆ

[16] ດັດຊະນີໝາຍແມ່ນອີງຕາມການບໍລິໂພກອາຫານປະລິມານໃດໜຶ່ງຢ່າງໜ້ອຍ 5 ຈາກ 8 ໝວດອາຫານດັ່ງຕໍ່ໄປນີ້: 1) ນົມແມ່, 2) ເມັດພືດ, ຮາກ ແລະ ຫົວພືດ, 3) ຜັກ ແລະ ຖົ່ວ, 4) ຜະລິດຕະພັນຈາກນົມ (ນົມ, ອາຫານເດັກອ່ອນ, ນົມສົ້ມ, ຊີສ), 5) ອາຫານສົດ (ຊີ້ນສັດ, ປາ, ໄກ່ ແລະ ຕັບ/ເຄື່ອງໃນ), 6) ໄຂ່, 7) ໝາກໄມ້ ແລະ ຜັກທີ່ອຸດົມດ້ວຍວິຕາມິນເອ ແລະ 8) ຜັກ ແລະ ໝາກໄມ້ອື່ນໆ

[17] ການລ້ຽງລູກດ້ວຍນົມແມ່ : ການໃຫ້ອາຫານແຂງ, ເຄິ່ງແຂງ ຫຼື ອ່ອນແມ່ນ 2 ເທື່ອສຳລັບເດັກອ່ອນ 6-8 ເດືອນ ແລະ 3 ເທື່ອສຳລັບເດັກ 6-23 ເດືອນ; ບໍ່ໄດ້ລ້ຽງລູກດ້ວຍນົມແມ່: ການໃຫ້ອາຫານແຂງ, ເຄິ່ງແຂງ ຫຼື ອ່ອນ, ນົມຝຸ່ນແມ່ນ 4 ເທື່ອສຳລັບເດັກອ່ອນ 6-23 ເດືອນ.

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| TC.43 | ການລ້ຽງລູກໂດຍໃຊ້ຂວດນົມ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 0-23 ເດືອນ ທີ່ໄດ້ຖືກລ້ຽງ ໂດຍໃຊ້ຂວດນົມ ໃນມື້ຜ່ານມາ | 40.1 |
| TC.44a<br>TC.44b | ເດັກທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ | | ອັດຕາສ່ວນຮ້ອຍ ຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີທີ່ມີ:<br>(a) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -2 (ປານກາງ ແລະ ຮຸນແຮງ)<br>(b) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -3 (ຮຸນແຮງ)<br>ຈາກຄ່າກາງຂອງນໍ້າໜັກທຽບໃສ່ອາຍຸຕາມມາດຕະຖານ WHO | 24.3<br>5.7 |
| TC.45a<br>TC.45b | ເດັກທີ່ມີຮ່າງກາຍເຕັ້ຍ | 2.2.1 | ອັດຕາສ່ວນຮ້ອຍ ຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີທີ່ມີ:<br>(a) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -2 (ປານກາງ ແລະ ຮຸນແຮງ)<br>(b) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -3 (ຮຸນແຮງ)<br>ຈາກຄ່າກາງຂອງລວງສູງທຽບໃສ່ອາຍຸຕາມມາດຕະຖານ WHO | 32.8<br>10.8 |
| TC.46a<br>TC.46b | ເດັກທີ່ມີຮ່າງກາຍຈ່ອຍຜອມ | 2.2.2 | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີທີ່ມີ:<br>(a) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -2 (ປານກາງ ແລະ ຮຸນແຮງ)<br>(b) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -3 (ຮຸນແຮງ)<br>ຈາກຄ່າກາງຂອງນໍ້າໜັກທຽບໃສ່ລວງສູງຕາມມາດຕະຖານ WHO | 10.7<br>2.7 |
| TC.47a<br>TC.47b | ເດັກທີ່ມີນໍ້າໜັກເກີນມາດຕະຖານ | 2.2.2 | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ມີ:<br>(a) ມີຄ່າຜັນປ່ຽນມາດຖານຕໍ່າກວ່າ -2 (ປານກາງ ແລະ ຮຸນແຮງ)<br>(b) ມີຄ່າຜັນປ່ຽນມາດຖານ ຕໍ່າກວ່າ -3 (ຂັ້ນຮຸນແຮງ)<br>ຈາກຄ່າກາງຂອງນໍ້າໜັກທຽບໃສ່ລວງສູງຕາມມາດຕະຖານ WHO | 2.8<br>1.0 |
| TC.48 | ການບໍລິໂພກເກືອໄອໂອດີນ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ໄດ້ກວດເກືອວ່າມີທາດໄອໂອດີນປະສົມຢູ່ ຫຼື ຄົວເຮືອນທີ່ບໍ່ໄດ້ມີເກືອບໍລິໂພກ | 49.1 |
| TC.49a<br>TC.49b<br>TC.49c | ການສະໜັບສະໜູນສໍາລັບການຮຽນຮູ້ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 24-59 ເດືອນ ທີ່ມີຜູ້ໃຫຍ່ ເຂົ້າຮ່ວມ 4 ກິດຈະກໍາ ຫຼື ຫຼາຍກວ່ານັ້ນ ເພື່ອສົ່ງເສີມການຮຽນຮູ້ໃນການກຽມພ້ອມເຂົ້າໂຮງຮຽນ ໃນ 3 ມື້ ຜ່ານມາ:<br>(a) ຜູ້ໃຫຍ່ທີ່ເປັນສະມາຊິກຂອງຄົວເຮືອນ<br>(b) ພໍ່<br>(c) ແມ່ | 26.1<br>8.0<br>17.1 |
| TC.50 | ການມີປຶ້ມສໍາລັບເດັກ | | ອັດຕາສ່ວນຮ້ອຍ ຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ມີປຶ້ມສໍາລັບເດັກນ້ອຍຈໍານວນ 3 ຫົວ ຫຼື ຫຼາຍກວ່ານັ້ນ | 2.8 |
| TC.51 | ການມີເຄື່ອງຫຼິ້ນສໍາລັບເດັກ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ ໄດ້ຫຼິ້ນເຄື່ອງຫຼິ້ນ 2 ຢ່າງ ຫຼື ຫຼາຍກວ່ານັ້ນ | 56.4 |
| TC.52 | ເດັກໄດ້ຮັບການດູແລບໍ່ພຽງພໍ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ຖືກປ່ອຍປະໃຫ້ຢູ່ຄົນດຽວ ຫຼື ປ່ອຍປະໃຫ້ຢູ່ພາຍໃຕ້ການດູແລຂອງເດັກນ້ອຍຄົນອື່ນທີ່ອາຍຸຕໍ່າກວ່າ 10 ປີເປັນເວລາຫຼາຍກວ່າ 1 ຊົ່ວໂມງ ຢ່າງໜ້ອຍ 1 ຄັ້ງໃນອາທິດທີ່ຜ່ານມາ | 13.7 |
| TC.53 | ດັດຊະນີຂອງການພັດທະນາເດັກໃນໄວເດັກ | 4.2.1 | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 36-59 ເດືອນທີ່ມີພັດທະນາການຖືກຕ້ອງຕາມມາດຕະຖານ ຢ່າງໜ້ອຍ 3 ໃນ 4 ດ້ານຄື: ການຮູ້ຕົວອັກສອນ ແລະ ຕົວເລກ, ດ້ານຮ່າງກາຍ, ດ້ານຄວາມຮູ້ສຶກທໍາງສັງຄົມ ແລະ ໃນຂົງເຂດການຮຽນຮູ້ | 58.7 |



# ການສຶກສາ ແລະ ການຮຽນຮູ້

© UNICEF Laos

# ການສຶກສາ ແລະ ການຮຽນຮູ້

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| LN.1 | ການຮຽນຢູ່ຊັ້ນການສຶກສາກ່ອນໄວຮຽນ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍ ອາຍຸ 36-59 ເດືອນ ທີ່ຮຽນຢູ່ຊັ້ນການສຶກສາກ່ອນໄວຮຽນ | 26.9 |
| LN.2 | ອັດຕາການເຂົ້າຮ່ວມການຮຽນ (1ປີ ກ່ອນການເຂົ້າຊັ້ນປະຖົມ) (ດັດປັບ) | 4.2.2 | ອັດຕາສ່ວນຮ້ອຍຂອງເດັກໃນກຸ່ມອາຍຸທີ່ເໝາະສົມ (ອາຍຸ 1 ປີ ກ່ອນເຖິງອາຍຸເກນເຂົ້າໂຮງຮຽນຊັ້ນປະຖົມສຶກສາ) ເຂົ້າຮຽນຢູ່ ຊັ້ນການສຶກສາກ່ອນໄວຮຽນ | 66.6 |
| LN.3 | ການກຽມພ້ອມເພື່ອເຂົ້າໂຮງຮຽນ | | ອັດຕາສ່ວນຮ້ອຍຂອງນັກຮຽນປີທີ 1 ຂອງຊັ້ນປະຖົມສຶກສາ ທີ່ໄດ້ຜ່ານຊັ້ນອະນຸບານສຶກສາ | 61.4 |
| LN.4 | ອັດຕາການເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ | | ອັດຕາສ່ວນຮ້ອຍຂອງນັກຮຽນທີ່ມີອາຍຸເຂົ້າໂຮງຮຽນຊັ້ນປະຖົມ ໄດ້ເຂົ້າຊັ້ນປໍ 1 | 72.8 |
| LN.5a<br>LN.5b<br>LN.5c | ອັດຕາການເຂົ້າຮຽນສຸດທິ (ດັດປັບ) | | ອັດຕາສ່ວນຮ້ອຍຂອງນັກຮຽນທີ່ຢູ່ໃນ:<br>(a) ເກນອາຍຸເຂົ້າຮຽນຊັ້ນປະຖົມ ໄດ້ເຂົ້າໂຮງຮຽນຊັ້ນປະຖົມ ຫຼື ມັດທະຍົມຕອນຕົ້ນ<br>(b) ເກນອາຍຸເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າໂຮງຮຽນມັດທະຍົມຕອນຕົ້ນ ຫຼື ສູງກວ່າ<br>(c) ເກນອາຍຸເຂົ້າຮຽນຊັ້ນມັດທະຍົມຕອນປາຍໄດ້ເຂົ້າໂຮງຮຽນມັດທະຍົມຕອນປາຍ ຫຼື ສູງກວ່າ | 86.0<br>61.8<br>37.1 |
| LN.6a<br>LN.6b<br>LN.6c | ອັດຕາເດັກຢູ່ນອກໂຮງຮຽນ | | ອັດຕາສ່ວນຮ້ອຍຂອງນັກຮຽນທີ່ຢູ່ໃນ:<br>(a) ເກນອາຍຸເຂົ້າຮຽນຊັ້ນປະຖົມ ທີ່ບໍ່ເຂົ້າໂຮງຮຽນຊັ້ນປະຖົມ ຫຼື ມັດທະຍົມຕອນຕົ້ນ<br>(b) ເກນອາຍຸເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ທີ່ບໍ່ເຂົ້າໂຮງຮຽນປະຖົມ, ມັດທະຍົມຕອນຕົ້ນ ຫຼື ຕອນປາຍ ຫຼື ສູງກວ່າ<br>(c) ເກນອາຍຸເຂົ້າຮຽນຊັ້ນມັດທະຍົມຕອນປາຍ ທີ່ບໍ່ເຂົ້າໂຮງຮຽນປະຖົມ, ມັດທະຍົມຕອນຕົ້ນ ຫຼື ຕອນປາຍ ຫຼື ສູງກວ່າ | 13.8<br>29.1<br>58.0 |
| LN.7a<br>LN.7b | ອັດຕາການເຂົ້າຮຽນລວມໃໝ່ ໃນປີສຸດທ້າຍຂອງຊັ້ນຮຽນ | | ອັດຕາສ່ວນຮ້ອຍຂອງນັກຮຽນໃໝ່ ໃນປີສຸດທ້າຍຂອງຊັ້ນຮຽນ ຕໍ່ເດັກໃນເກນອາຍຸເຂົ້າຮຽນໃນປີສຸດທ້າຍຂອງຊັ້ນຮຽນດັ່ງກ່າວ<br>(a) ຊັ້ນປະຖົມສຶກສາ<br>(b) ຊັ້ນມັດທະຍົມຕອນຕົ້ນ | 95.0<br>63.8 |
| LN.8a<br>LN.8b<br>LN.8c | ອັດຕາການສຳເລັດຊັ້ນຮຽນ | 4.1.2 | ອັດຕາສ່ວນຮ້ອຍຂອງນັກຮຽນທີ່ມີອາຍຸເກີນອາຍຸ ທີ່ຄວນສຳເລັດການສຶກສາ 3-5 ປີ ທີ່ໄດ້ຈົບຊັ້ນ:<br>(a) ຊັ້ນປະຖົມສຶກສາ<br>(b) ຊັ້ນມັດທະຍົມຕອນຕົ້ນ<br>(c) ຊັ້ນມັດທະຍົມຕອນປາຍ | 87.6<br>56.2<br>37.4 |
| LN.9 | ອັດຕາການເລື່ອນຊັ້ນທີ່ມີປະສິດທິຜົນ ຈາກຂັ້ນ ປ.5 ຫາ ຂັ້ນ ມ.1 | | ອັດຕາສ່ວນຮ້ອຍຂອງນັກຮຽນ ທີ່ເຂົ້າຮຽນຂັ້ນສຸດທ້າຍຂອງຊັ້ນປະຖົມໃນສົກຮຽນຜ່ານມາ ທີ່ບໍ່ໄດ້ຄ້າງຫ້ອງ ແລະ ໄດ້ສືບຕໍ່ຮຽນຂັ້ນ ມ.1 ໃນສົກຮຽນປັດຈຸບັນ | 89.6 |
| LN.10a<br>LN.10b | ອາຍຸເກີນຕາມຂັ້ນຮຽນ | | ອັດຕາສ່ວນຮ້ອຍຂອງນັກຮຽນທີ່ເຂົ້າຮຽນໃນແຕ່ລະຂັ້ນ ທີ່ມີອາຍຸເກີນ 2 ປີ:<br>(a) ປະຖົມສຶກສາ<br>(b) ມັດທະຍົມຕອນຕົ້ນ | 10.3<br>8.5 |

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| LN.11a<br>LN.11b<br>LN.11c<br>LN.11d | ດັດຊະນີຄວາມສະເໝີພາບທາງດ້ານການສຶກສາ<br>(a) ເພດ<br>(b) ຄວາມຢູ່ດີກິນດີ<br>(c) ເຂດທີ່ພັກອາໄສ<br>(d) ການທຳງານຂອງຮ່າງກາຍ | 4.5.1 | ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກຍິງ ຫານໃຫ້ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກຊາຍ. | |
| | | | (a) ການຮຽນຮູ້ທີ່ຜ່ານການຮັບຮອງຈາກການຈັດຕັ້ງ (ຕ່ຳກວ່າອາຍຸເຂົ້າຮຽນຊັ້ນປະຖົມເປັນທາງການ) | 1.04 |
| | | | (b) ຊັ້ນປະຖົມສຶກສາ | 1.03 |
| | | | (c) ຊັ້ນມັດທະຍົມຕອນຕົ້ນ | 1.03 |
| | | | (d) ຊັ້ນມັດທະຍົມຕອນປາຍ | 1.04 |
| | | | ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກໃນກຸ່ມຄົວເຮືອນທຸກຍາກທີ່ສຸດ ຫານໃຫ້ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກ ໃນກຸ່ມຄົວເຮືອນຮັ່ງມີທີ່ສຸດ. | |
| | | | (a) ການຮຽນຮູ້ທີ່ຜ່ານການຮັບຮອງຈາກການຈັດຕັ້ງ (ຕ່ຳກວ່າອາຍຸເຂົ້າຮຽນຊັ້ນປະຖົມເປັນທາງການ) | 0.52 |
| | | | (b) ຊັ້ນປະຖົມສຶກສາ | 0.78 |
| | | | (c) ຊັ້ນມັດທະຍົມຕອນຕົ້ນ | 0.36 |
| | | | (d) ຊັ້ນມັດທະຍົມຕອນປາຍ | 0.09 |
| | | | ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກໃນຊົນນະບົດ ຫານໃຫ້ອັດຕາການເຂົ້າຮຽນສຸດທິ (ດັດປັບ) ສຳລັບເດັກໃນເຂດຕົວເມືອງ | |
| | | | (a) ການຮຽນຮູ້ທີ່ຜ່ານການຮັບຮອງຈາກການຈັດຕັ້ງ (ຕ່ຳກວ່າອາຍຸເຂົ້າຮຽນຊັ້ນປະຖົມເປັນທາງການ) | 0.71 |
| | | | (b) ຊັ້ນປະຖົມສຶກສາ | 0.94 |
| | | | (c) ຊັ້ນມັດທະຍົມຕອນຕົ້ນ | 0.68 |
| | | | (d) ຊັ້ນມັດທະຍົມຕອນປາຍ | 0.45 |
| | | | ອັດຕາສ່ວນຮ້ອຍຂອງເດັກຍິງທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ ຫານໃຫ້ ອັດຕາສ່ວນຮ້ອຍຂອງເດັກຊາຍ ທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ. | |
| | | | (a) ການອ່ານ, ອາຍຸ 7-14 ປີ | 1.09 |
| | | | (b) ເລກ, ອາຍຸ 7-14 ປີ | 1.03 |
| | | | (c) ການອ່ານ, ອາຍຸສຳລັບຊັ້ນປີ 2/3 | 1.25 |
| | | | (d) ຕົວເລກ, ອາຍຸສຳລັບຊັ້ນປີ 2/3 | 1.16 |
| | | | (e) ການອ່ານ, ເຂົ້າຮຽນ ປີ 2/3 | 1.11 |
| | | | (f) ເລກ, ເຂົ້າຮຽນ ປີ 2/3 | 1.01 |
| | | | ອັດຕາສ່ວນຮ້ອຍຂອງເດັກໃນກຸ່ມຄົວເຮືອນທຸກຍາກທີ່ສຸດທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ ຫານໃຫ້ ອັດຕາສ່ວນຮ້ອຍຂອງເດັກກຸ່ມຄົວເຮືອນຮັ່ງມີທີ່ສຸດ ທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ. | |
| | | | (a) ການອ່ານ, ອາຍຸ 7-14 ປີ | 0.30 |
| | | | (b) ເລກ, ອາຍຸ 7-14 ປີ | 0.30 |
| | | | ອັດຕາສ່ວນຮ້ອຍຂອງເດັກໃນເຂດຊົນນະບົດທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ ຫານໃຫ້ ອັດຕາສ່ວນຮ້ອຍຂອງເດັກໃນເຂດຕົວເມືອງທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ | |
| | | | (a) ການອ່ານ, ອາຍຸ 7-14 ປີ | 0.63 |
| | | | (b) ເລກ, ອາຍຸ 7-14 ປີ | 0.63 |
| | | | ອັດຕາສ່ວນຮ້ອຍຂອງເດັກ ທີ່ມີຄວາມຫຍຸ້ງຍາກດ້ານໜ້າທີ່ການ ທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ ຫານໃຫ້ ອັດຕາສ່ວນຮ້ອຍຂອງ ເດັກທີ່ບໍ່ມີຄວາມຫຍຸ້ງຍາກດ້ານໜ້າທີ່ການ ທີ່ມີທັກສະການຮຽນຮູ້ຂັ້ນພື້ນຖານ | |
| | | | (a) ການອ່ານ, ອາຍຸ 7-14 ປີ | 0.63 |
| | | | (b) ເລກ, ອາຍຸ 7-14 ປີ | 0.64 |

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| LN.12 | ການມີຂໍ້ມູນກ່ຽວກັບການເຄື່ອນໄຫວ ຫຼື ການຮຽນຮູ້ຂອງເດັກໃນໂຮງຮຽນ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ຊຶ່ງຜູ້ປົກຄອງໄດ້ຮັບບັດລາຍງານຂອງໂຮງຮຽນກ່ຽວກັບເດັກໃນປີຜ່ານມາ | 7.2 |
| LN.13 | ໂອກາດເຂົ້າຮ່ວມໃນການບໍລິຫານໂຮງຮຽນ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ທີ່ມີຜູ້ປົກຄອງ ເຂົ້າຮ່ວມປຶກສາຫາລືກັບຄະນະບໍລິຫານຂອງໂຮງຮຽນ | 20.1 |
| LN.14 | ການເຂົ້າຮ່ວມໃນການບໍລິຫານໂຮງຮຽນ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ທີ່ມີຜູ້ໃຫຍ່ ທີ່ເປັນສະມາຊິກຄົວເຮືອນເຂົ້າຮ່ວມກອງປະຊຸມຄະນະບໍລິຫານຂອງໂຮງຮຽນໃນປີຜ່ານມາ | 6.9 |
| LN.15 | ການເຂົ້າຮ່ວມບໍລິຫານໂຮງຮຽນທີ່ມີປະສິດທິຜົນ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ທີ່ມີຜູ້ໃຫຍ່ ທີ່ເປັນສະມາຊິກຄົວເຮືອນເຂົ້າຮ່ວມໃນກອງປະຊຸມຂອງຄະນະບໍລິຫານຂອງໂຮງຮຽນ ເພື່ອໂອ້ລົມກ່ຽວກັບບັນຫາດ້ານການສຶກສາທີ່ສຳຄັນ ແລະ ການເງິນໃນປີຜ່ານມາ | 3.8 |
| LN.16 | ການປຶກສາຫາລືກ່ຽວກັບຄວາມກ້າວໜ້າຂອງນັກຮຽນ | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ທີ່ມີຜູ້ໃຫຍ່ ທີ່ເປັນສະມາຊິກຄົວເຮືອນໄດ້ມີການປຶກສາຫາລືກັບຄູສອນກ່ຽວກັບຄວາມກ້າວໜ້າການຮຽນຂອງເດັກ | 6.5 |
| LN.17 | ການປະສານກັບໂຮງຮຽນກໍລະນີຄູສອນບໍ່ຂຶ້ນຫ້ອງສອນ[18] | | ອັດຕາສ່ວນຮ້ອຍຂອງເດັກ ອາຍຸ 7-14 ປີ ທີ່ໄດ້ເຂົ້າໂຮງຮຽນ ຊຶ່ງບໍ່ໄດ້ເຂົ້າຫ້ອງຮຽນຢ່າງໜ້ອຍໜຶ່ງຄັ້ງໃນປີຜ່ານມາ ເນື່ອງຈາກຄູສອນບໍ່ຂຶ້ນຫ້ອງ ແລະ ຜູ້ໃຫຍ່ທີ່ເປັນສະມາຊິກຄົວເຮືອນມີການສື່ງຂ່າວກັບຕົວແທນຂອງໂຮງຮຽນ ກໍລະນີເດັກນ້ອຍບໍ່ສາມາດໄປໂຮງຮຽນໄດ້ | 14.9 |
| LN.18 | ຈຳນວນປຶ້ມອ່ານຢູ່ເຮືອນ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 7-14 ປີທີ່ມີປຶ້ມຢ່າງໜ້ອຍ 3 ຫົວສຳລັບອ່ານຢູ່ເຮືອນ | 10.1 |
| LN.19 | ນິໄສການອ່ານຢູ່ເຮືອນ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 7-14 ປີທີ່ ອ່ານປຶ້ມ ຫຼື ອ່ານຢູ່ເຮືອນ | 65.9 |
| LN.20 | ພາສາທີ່ໃຊ້ຢູ່ໂຮງຮຽນ ແລະ ຢູ່ເຮືອນ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 7-14 ປີທີ່ ຢູ່ເຮືອນເວົ້າພາສາທີ່ຄູສອນໃຊ້ຢູ່ໂຮງຮຽນ | 74.9 |
| LN.21 | ການຊຸກຍູ້ການເຮັດວຽກບ້ານ | | ອັດຕາສ່ວນຮ້ອຍຂອງເດັກອາຍຸ 7-14 ປີທີ່ໄດ້ວຽກມອບໝາຍໃຫ້ໄປເຮັດຢູ່ເຮືອນ (ມີວຽກບ້ານ) | 50.7 |
| LN.22a<br>LN.22b<br>LN.22c<br>LN.22d<br>LN.22e<br>LN.22f | ເດັກນ້ອຍທີ່ມີທັກສະການອ່ານ ແລະ ຄະນິດສາດພື້ນຖານ | 4.1.1 | ອັດຕາສ່ວນຮ້ອຍຂອງເດັກນ້ອຍທີ່ປະສົບຜົນສຳເລັດ ສາມບົດທົດສອບກ່ຽວກັບການອ່ານພື້ນຖານ<br>(a) ອາຍຸ 7-14 ປີ<br>(b )ອາຍຸສຳລັບຊັ້ນປໍ 2/3<br>(c) ເຂົ້າຮຽນ ປໍ2/3<br>ອັດຕາສ່ວນຮ້ອຍຂອງເດັກນ້ອຍທີ່ປະສົບຜົນສຳເລັດສີ່ບົດທົດສອບກ່ຽວກັບຄະນິດສາດພື້ນຖານ<br>(d) ອາຍຸ 7-14 ປີ<br>(e) ອາຍຸສຳລັບຊັ້ນປໍ 2/3<br>(f) ເຂົ້າຮຽນ ປໍ2/3 | 38.5<br>18.6<br>16.2<br>42.1<br>22.6<br>19.7 |

[18] ຊື່ຂອງຕົວຊີ້ບອກໄດ້ຖືກປ່ຽນຈາກ ມາດຕະຖານຂອງການສຳຫຼວດສຸຂະພາບແມ່ ແລະ ເດັກ MICS ຕົວຊີ້ບອກ LN.17 - ການພົວພັນກັບໂຮງຮຽນກ່ຽວກັບການປະທ້ວງ ແລະ ການຂາດສອນຂອງຄູ ຍ້ອນວ່າບໍ່ມີການອະນຸຍາດໃຫ້ປະທ້ວງໃນ ສປປ.ລາວ



# ການປົກປ້ອງເດັກ ຈາກຄວາມຮຸນແຮງ ແລະ ການສະແຫວງຫາ ຜົນປະໂຫຍດ

© UNICEF Laos

## ການປົກປ້ອງເດັກຈາກຄວາມຮຸນແຮງ ແລະ ການສະແຫວງຫາຜົນປະໂຫຍດ

| ຕົວຊີ້ບອກ MICS | | ປພຍ (SDG) | ນິຍາມ | ສ່ວນຮ້ອຍ |
|---|---|---|---|---|
| PR.1 | ການຂຶ້ນທະບຽນການເກີດ | 16.9.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸຕໍ່າກວ່າ 5 ປີ ທີ່ໄດ້ຂຶ້ນທະບຽນການເກີດກັບອໍານາດການປົກຄອງ (ລວມທັງໄດ້ຂຶ້ນທະບຽນຢູ່ໃນປຶ້ມສໍາມະໂນຄົວ) | 65.0 |
| PR.2 | ການໃສ່ລະບຽບວິໄນເດັກ | 16.2.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸ 1-14 ປີທີ່ໄດ້ຖືກທໍາຮ້າຍທາງດ້ານຈິດໃຈ ແລະ ຖືກໂທດທາງຮ່າງກາຍ ພາຍໃນໄລຍະ 1 ເດືອນຜ່ານມາ | 62.3 |
| PR.3 | ແຮງງານເດັກ | 8.7.1 | ອັດຕາສ່ວນຮ້ອຍຂອງເດັກອາຍຸ 5-17 ປີທີ່ພົວພັນກັບການໃຊ້ແຮງງານເດັກ[19] | 23.1 |
| PR.4a<br>PR.4b | ການແຕ່ງງານກ່ອນອາຍຸ | 5.3.1 | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ແມ່ຍິງ ແລະ ຜູ້ຊາຍ ອາຍຸ 20-24 ປີ ທີ່ແຕ່ງງານຄັ້ງທໍາອິດ ຫຼື ຢູ່ຮ່ວມກັນກ່ອນອາຍຸ<br>ແມ່ຍິງ<br>(a) ກ່ອນອາຍຸ 15 ປີ<br>(b) ກ່ອນອາຍຸ 18 ປີ<br>ຜູ້ຊາຍ<br>(a) ກ່ອນອາຍຸ 15 ປີ<br>(b) ກ່ອນອາຍຸ 18 ປ | <br><br><br>6.1<br>30.5<br><br>1.1<br>10.0 |
| PR.5 | ໄວໜຸ່ມອາຍຸ 15-19 ປີ ປະຈຸບັນໄດ້ແຕ່ງງານ ຫຼື ຢູ່ຮ່ວມກັນແລ້ວ | | ອັດຕາສ່ວນຮ້ອຍຂອງໄວໜຸ່ມ ແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-19 ປີ ທີ່ແຕ່ງງານ ຫຼື ຢູ່ຮ່ວມກັນແລ້ວ<br>ແມ່ຍິງ<br>ຜູ້ຊາຍ | <br><br>26.6<br>10.2 |
| PR.6 | ການມີຄູ່ຫຼາຍຄົນ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີທີ່ມີຄູ່ຫຼາຍຄົນ/ຢູ່ຮ່ວມກັນ:<br>ແມ່ຍິງ<br>ຜູ້ຊາຍ | <br><br>1.3<br>20.4 |
| PR.7a<br>PR.7b | ຄວາມແຕກຕ່າງລະຫວ່າງອາຍຸຂອງຄູ່ສົມລົດ | | ອັດຕາສ່ວນຮ້ອຍຂອງແມ່ຍິງທີ່ແຕ່ງງານ ຫຼື ຢູ່ຮ່ວມກັນ ແລະ ຄູ່ສົມລົດຂອງເຂົາທີ່ມີອາຍຸແກ່ກວ່າຕົນ 10 ປີ ຫຼື ຫຼາຍກວ່ານັ້ນ<br>(a) ໃນບັນດາກຸ່ມແມ່ຍິງອາຍຸ 15-19 ປີ<br>(b) ໃນບັນດາກຸ່ມແມ່ຍິງອາຍຸ 20-24 ປີ | <br><br>8.9<br>8.1 |
| PR.15 | ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງ ໃນຄອບຄົວ | | ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍ ອາຍຸ 15-49 ປີທີ່ບອກວ່າຖືກທຸບຕີຈາກຜົວຂອງເຂົາຢ່າງໜ້ອຍ 1 ເຫດການຕໍ່ໄປນີ້: (1) ເມຍອອກໄປນອກບໍ່ຄອບ, (2) ເມຍບໍ່ເບິ່ງລູກ, (3) ເມຍຖຽງຜົວ, (4) ເມຍບໍ່ຍອມມີເພດສໍາພັນນໍາ, (5) ເມຍເຮັດອາຫານໄໝ<br>ແມ່ຍິງ<br>ຜູ້ຊາຍ | <br><br>12.5<br>10.6 |

[19] ເດັກນ້ອຍທີ່ກ່ຽວຂ້ອງກັບການໃຊ້ແຮງງານ ແມ່ນຖືກນິຍາມວ່າ ເດັກນ້ອຍທີ່ກ່ຽວຂ້ອງກັບກິດຈະກໍາເສດຖະກິດຕ່າງໆເກີນເກນອາຍຸສະເພາະໃດໜຶ່ງ ເດັກນ້ອຍທີ່ກ່ຽວຂ້ອງກັບວຽກເຮືອນເກີນເກນອາຍຸສະເພາະໃດໜຶ່ງ, ເດັກນ້ອຍທີ່ກ່ຽວຂ້ອງກັບວຽກອັນຕະລາຍ. ສໍາລັບຂໍ້ມູນລະອຽດ ແລະ ການຈັດປະເພດແມ່ນສາມາດເບິ່ງໄດ້ໃນຕາຕະລາງຂອງການສໍາຫຼວດແມ່ ແລະ ເດັກ (MICS).



# ການດຳລົງຊີວິດ ໃນສະພາບແວດລ້ອມ ທີ່ສະອາດ ແລະ ປອດໄພ

© UNICEF Laos

# ການດໍາລົງຊີວິດໃນສະພາບແວດລ້ອມທີ່ສະອາດ ແລະ ປອດໄພ

| ຕົວຊີ້ບອກ MICS | | ປພຍ (SDG)[1] | ນິຍາມ[3] | ສ່ວນຮ້ອຍ |
|---|---|---|---|---|
| WS.1 | ການໃຊ້ນໍ້າດື່ມຈາກແຫຼ່ງນໍ້າທີ່ໄດ້ຮັບການປັບປຸງ | | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ໃຊ້ນໍ້າດື່ມຈາກແຫຼ່ງນໍ້າທີ່ໄດ້ຮັບການປັບປຸງ | 87.0 |
| WS.2 | ການໃຊ້ບໍລິການນໍ້າດື່ມພື້ນຖານ | 1.4.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ໃຊ້ນໍ້າດື່ມຈາກແຫຼ່ງນໍ້າທີ່ໄດ້ປັບປຸງຈາກທີ່ພັກອາໄສ, ບໍລິເວນເຮືອນ, ທີ່ໃຊ້ເວລາໄປ-ກັບພາຍໃນ 30 ນາທີ | 86.4 |
| WS.3 | ຄວາມພຽງພໍຂອງນໍ້າດື່ມ | | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ມີແຫຼ່ງນໍ້າພຽງພໍເມື່ອຕ້ອງການໃຊ້ | 90.7 |
| WS.4 | ແຫຼ່ງນໍ້າທີ່ມີສານປົນເປື້ອນ | | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ໄດ້ຮັບການກວດຄຸນນະພາບນໍ້າ ແລະ ພົບວ່າມີການປົນເປື້ອນຂອງ E. coli | 70.4 |
| WS.5 | ການປົນເປື້ອນຂອງນໍ້າດື່ມໃນຄົວເຮືອນ | | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ໄດ້ຮັບການກວດຄຸນນະພາບນໍ້າດື່ມໃນຄົວເຮືອນ ແລະ ພົບວ່າມີປົນເປື້ອນຂອງ E. coli | 72.3 |
| WS.6 | ການນໍາໃຊ້ບໍລິການນໍ້າດື່ມທີ່ປອດໄພ | 6.1.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ມີແຫຼ່ງນໍ້າດື່ມທີ່ໄດ້ປັບປຸງ ແລະ ໄດ້ຮັບການກວດຄຸນນະພາບຂອງແຫຼ່ງນໍ້າດື່ມດັ່ງກ່າວວ່າບໍ່ມີການປົນເປື້ອນຂອງ E. coli ແລະ ມີພຽງພໍເມື່ອຕ້ອງການໃຊ້ | 25.9 |
| WS.7 | ສິ່ງອໍານວຍຄວາມສະດວກໃນການລ້າງມືດ້ວຍ ນໍ້າ ແລະ ສະບູ | 1.4.1 & 6.2.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ມີສິ່ງອໍານວຍຄວາມສະດວກໃນການລ້າງມືໂດຍມີ ນໍ້າ, ສະບູ ຫຼື ຜະລິດຕະພັນທໍາຄວາມສະອາດ | 63.0 |
| WS.8 | ການນໍາໃຊ້ວິດຖ່າຍທີ່ໄດ້ປັບປຸງ | | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ນໍາໃຊ້ວິດຖ່າຍທີ່ໄດ້ປັບປຸງ | 85.7 |
| WS.9 | ການນໍາໃຊ້ວິດຖ່າຍພື້ນຖານ | 1.4.1 & 3.8.1 & 6.2.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ໄດ້ນໍາໃຊ້ວິດຖ່າຍທີ່ໄດ້ປັບປຸງ ແຕ່ບໍ່ໄດ້ໃຊ້ຮ່ວມກັບຄົນອື່ນ | 83.5 |
| WS.10 | ການກໍາຈັດອາຈົມໃນວິດຖ່າຍຢ່າງປອດໄພ | 6.2.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ມີວິດຖ່າຍທີ່ໄດ້ປັບປຸງເຊິ່ງບໍ່ໄດ້ລະບາຍລົງຮ່ອງນໍ້າ ຫຼື ບໍ່ມີມື້ເຕັມ | 90.4 |
| WS.11 | ການນໍາອາຈົມອອກເພື່ອໄປບໍາບັດ | 6.2.1 | ອັດຕາສ່ວນຮ້ອຍຂອງສະມາຊິກຄົວເຮືອນທີ່ມີວິດຖ່າຍທີ່ບໍ່ລະບາຍລົງຮ່ອງນໍ້າ ແລະ ມີການນໍາໃຊ້ບໍລິການ ການເອົາອາຈົມອອກໄປ | 7.7 |
| WS.12 | ການຈັດການສຸຂະອານາໄມໃນເວລາເປັນປະຈໍາເດືອນ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ລາຍງານວ່າໄດ້ເປັນປະຈໍາເດືອນໃນ 12 ເດືອນຜ່ານມາ ແລະ ມີສະຖານທີ່ເປັນສ່ວນຕົວເພື່ອລ້າງ ແລະ ປ່ຽນຜ້າອະນາໄມ | 83.5 |
| WS.13 | ການຍົກເວັ້ນກິດຈະກໍາຕ່າງໆໃນໄລຍະ ເປັນປະຈໍາເດືອນ | | ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ລາຍງານວ່າໄດ້ເປັນມີປະຈໍາຈໍາເດືອນໃນ 12 ເດືອນຜ່ານມາທີ່ບໍ່ໄດ້ເຂົ້າຮ່ວມກິດຈະກໍາສັງຄົມຕ່າງໆ, ໂຮງຮຽນ ຫຼື ຫ້ອງການ ເນື່ອງຈາກການເປັນປະຈໍາເດືອນຄັ້ງລ່າສຸດຂອງຕົນ | 9.8 |



# ໂອກາດເທົ່າທຽມກັນ ໃນຊີວິດ

© UNICEF Laos

## ໂອກາດເທົ່າທຽມກັນໃນຊີວິດ

| ຕົວຊີ້ບອກ MICS | | ປພຍ (SDG)[1] | ນິຍາມ[3] | ສ່ວນຮ້ອຍ |
|---|---|---|---|---|
| EQ.1 | ເດັກນ້ອຍທີ່ມີຄວາມຫຍຸ້ງຍາກທາງດ້ານຮ່າງກາຍ | | ອັດຕາສ່ວນຮ້ອຍຂອງ ເດັກນ້ອຍອາຍຸ 2-17 ປີລາຍງານວ່າມີຄວາມຫຍຸ້ງຍາກທາງດ້ານຮ່າງກາຍຢ່າງໜ້ອຍ ໜຶ່ງຢ່າງ | 2.6 |
| EQ.3 | ປະຊາກອນທີ່ປົກຄຸມດ້ວຍສະຫວັດດີການສັງຄົມ | 1.3.1 | ອັດຕາສ່ວນຮ້ອຍຂອງປະຊາກອນທີ່ໄດ້ຮັບສະຫວັດດີການສັງຄົມໃດໜຶ່ງ ແລະ ເງິນອຸດໜູນໃນໄລຍະ 3 ເດືອນຜ່ານມາ | 22.6 |
| EQ.4 | ການຊ່ວຍເຫຼືອທາງເສດຖະກິດຈາກພາຍນອກໃຫ້ຄອບຄົວທຸກຍາກທີ່ສຸດ | | ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ຢູ່ກຸ່ມຄົວເຮືອນທຸກ ແລະ ທຸກທີ່ສຸດທີ່ໄດ້ຮັບການຊ່ວຍເຫຼືອທາງສັງຄົມໃນໄລຍະ 3 ເດືອນຜ່ານມາ | 20.8 |
| EQ.5 | ເດັກນ້ອຍທີ່ອາໄສໃນຄົວເຮືອນ ທີ່ໄດ້ຮັບການຊ່ວຍເຫຼືອທາງສັງຄົມໃດໜຶ່ງ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸຕໍ່າກວ່າ 18 ປີທີ່ອາໄສໃນຄົວເຮືອນ ທີ່ໄດ້ການຊ່ວຍເຫຼືອທາງສັງຄົມໃດໜຶ່ງໃນໄລຍະ 3 ເດືອນຜ່ານມາ | 23.8 |
| EQ.6 | ການສະໜັບສະໜູນກ່ຽວກັບການສຶກສາ | | ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 5-24 ປີທີ່ໄດ້ເຂົ້າໂຮງຮຽນ ແລະ ໄດ້ຮັບການສະໜັບສະໜູນກ່ຽວກັບການສຶກສາໃນສົກຮຽນປະຈຸບັນ ຫຼື ສົກຮຽນຜ່ານມາ | 6.6 |

# LSIS III

MICS
GENERATING EVIDENCE TO DELIVER FOR CHILDREN




LAO STATISTICS BUREAU

**Ministry of Planning and Investment,**
**Lao Statistic Bureau**

Dongnasokneua Village, Sikhottabong District, Vientiane capital
Email: lstats@lsb.gov.la
Telephone: + 856 21 214740,
Fax: +856 21 242022

unicef
ເພື່ອເດັກທຸກໆຄົນ

**UNICEF Lao PDR Country Office**

P.O.Box 1080, Km 3 Thadeua Road,
Vientiane Capital, Lao PDR
Website: unicef.org/laos
Email: vientiane@unicef.org
Telephone: +856 21 487500